# ຊີວິດ ປ່ຽມສຸກ

## ເຂົ້າໃຈຄວາມໝາຍຂອງ ການຕ້ອນຮັບພຣະຄຣິດ




**ຈອຍຊ໌ ໄມເອີຣ໌**

*ຜູ້ຂຽນປຶ້ມຍອດນິຍົມອັນດັບ #1 ຂອງນິວຢອກ ທາຍມ໌*

**ທາງຊີວິດໃໝ່**

# ເຂົ້າໃຈຄວາມໝາຍຂອງ
# ການຕ້ອນຮັບພຣະຄຣິດ

ຈອຍຊ໌ ໄມເອີຣ໌

# ສາລະບານ

1. ການຕັດສິນໃຈຄັ້ງທີ່ສຳຄັນທີ່ສຸດໃນຊີວິດ 1
2. ເຮົາທຸກຄົນລ້ວນເຮັດບາບ 6
3. ເຖິງເວລາແລ້ວທີ່ຈະຍອມຈຳນົນ 12
4. ທາງຊີວິດໃໝ່ 18
5. ການຄິດແບບໃໝ່ 29
6. ການເວົ້າແບບໃໝ່ 37
7. ການເບິ່ງຕົວເອງດ້ວຍສາຍຕາແບບໃໝ່ 42
8. ແລກປ່ຽນລະຫວ່າງຄວາມຢ້ານກັບຄວາມເຊື່ອ 48
9. ຊີວິດປ່ຽນສຸກ 53
ຄຳອະທິຖານເພື່ອຮັບຄວາມລອດພົ້ນ
ປຶ້ມແລະຊີດີແນະນຳ

# ບົດທີ່ 1
# ການຕັດສິນໃຈຄັ້ງສຳຄັນທີ່ສຸດໃນຊີວິດ

ທ່ານຮູ້ສຶກບໍ່ພໍໃຈກັບຊີວິດຂອງທ່ານຢູ່ແມ່ນບໍ່ ? ຖ້າແມ່ນ ທ່ານບໍ່ແມ່ນຄົນດຽວທີ່ຮູ້ສຶກແບບນັ້ນດອກ ມີຫຼາຍໆຄົນທີ່ຮູ້ສຶກອິດເມື່ອຍ, ອ່ອນແຮງ , ຮູ້ສຶກໂດດດ່ຽວປ່ຽວພອຍແລະບໍ່ພໍໃຈກັບຊີວິດ ບາງຄົນກໍ່ອິດເມື່ອຍກັບການເຄັ່ງສາສະໜາ ໂດຍຫວັງວ່າຈະໄດ້ພົບທາງອອກໃຫ້ແກ່ຊີວິດ ແຕ່ພັດຕ້ອງມາແບກພາລະໜັກກັບການຍຶດກົດເກນອັນໄຮ້ສາລະ ແລະບໍ່ມີຊີວິດເຊິ່ງພວກເຂົາບໍ່ສາມາດເຮັດຕາມໄດ້ ຖ້າທ່ານອິດເມື່ອຍກັບສາສະໜາອັນນັ້ນບໍ່ໄດ້ໝາຍຄວາມວ່າ ທ່ານອິດເມື່ອຍກັບພຣະເຈົ້າ ຜູ້ຊຶ່ງເປັນຄຳຕອບໃຫ້ກັບຊີວິດທີ່ຫວ່າງເປົ່າ,ທໍ້ຖອຍ ແລະເຕັມໄປດ້ວຍ ຄວາມຮູ້ສຶກຜິດຂອງທ່ານ .

ຖ້າທ່ານຕ້ອງການຮູ້ສຶກວ່າມີຄົນຮັກທ່ານ ຖ້າທ່ານຕ້ອງການໝູ່ເພື່ອນຄົນໜຶ່ງ ຖ້າທ່ານຕ້ອງການໄດ້ຮັບການຍົກຄວາມບາບ ແລະຖ້າທ່ານຕ້ອງການອະນາຄົດ ... ພຣະເຢຊູຄຣິດເປັນຄຳຕອບໃຫ້ແກ່ທ່ານໄດ້ ພຣະອົງກຳລັງຄອຍຖ້າເພື່ອມອບຊີວິດໃໝ່ໃຫ້ແກ່ທ່ານ ແລະ ຊົງຄອຍຖ້າເພື່ອສ້າງຊີວິດທ່ານຂຶ້ນມາໃໝ່ .

ຖ້າທ່ານຮູ້ສຶກບໍ່ພໍໃຈກັບຊີວິດ ທ່ານຈຳເປັນຕ້ອງປ່ຽນແປງບາງສິ່ງບາງຢ່າງ ຖ້າເຮົາຍັງຄົງເຮັດໃນສິ່ງເດີມໆ ເຮົາກໍ່ຈະຍັງມີຊີວິດເດີມໆ ຄືກັນກັບທີ່ເຮົາມີຕະຫຼອດມາທ່ານຕ້ອງຕັດສິນໃຈ ແລະນີ້ເປັນການຕັດສິນໃຈຄັ້ງທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ .

*ການຕັດສິນໃຈຄັ້ງສໍາຄັນທີ່ສຸດໃນຊີວິດ*

# *ທາງຊີວິດໃໝ່*

ການຕັດສິນໃຈຄັ້ງນີ້ສໍາຄັນຫຼາຍຍິ່ງກວ່າການເລືອກອາຊີບການເລືອກມະຫາວິທະຍາໄລເພື່ອຮຽນຕໍ່ , ການເລືອກຄູ່ຄອງ ຫຼືການເລືອກບ່ອນຢູ່ອາໄສຂອງທ່ານ ການຕັດສິນໃຈຄັ້ງນີ້ກ່ຽວຂ້ອງກັບຄວາມເປັນນິລັນດອນໝາຍເຖິງເວລາທີ່ບໍ່ສິ້ນສຸດແລະພວກເຮົາແຕ່ລະຄົນຈໍາເປັນຕ້ອງຮູ້ວ່າເຮົາຈະໃຊ້ເວລາຢູ່ໃສໄດ້ມີຊີວິດຫຼັງຄວາມຕາຍ ເມື່ອທ່ານຕາຍ ທ່ານບໍ່ໄດ້ຢຸດການມີຊີວິດຢູ່ຂອງທ່ານພຽງແຕ່ທ່ານໄປເລີ່ມຕົ້ນມີຊີວິດໃໝ່ຢູ່ໃນອີກບ່ອນໜຶ່ງເທົ່ານັ້ນມີຄໍາເວົ້າທີ່ກ່າວໄວ້ວ່າ ການຕາຍນັ້ນເປັນເໝືອນການຂ້າມຜ່ານປະຕູແຫ່ງການໂຄຈອນຄືການທີ່ທ່ານຈາກບ່ອນໜຶ່ງເພື່ອໄປຫາບ່ອນແຫ່ງໜຶ່ງເທົ່ານັ້ນ .

ທ່ານຢາກມີຄວາມສໍາພັນກັບພຣະເຈົ້າໃນໂລກນີ້ ແລະມີຊີວິດຢູ່ກັບພຣະອົງຊົ່ວນິລັນດອນບໍ່ ? ຖ້າຫາກຕ້ອງການເຊັ່ນນັ້ນ ທ່ານຕ້ອງຕ້ອງຮັບພຣະເຢຊູໃນຖານະພຣະຜູ້ຊ່ວຍໃຫ້ລອດຂອງທ່ານ ເຮົາທຸກຄົນເປັນຄົນບາບແລະເຮົາທຸກຄົນຕ້ອງການພຣະຜູ້ຊ່ວຍໃຫ້ລອດ ພຣະເຈົ້າຊົງສົ່ງພຣະບຸດອົງດຽວຂອງພຣະອົງມາ ເພື່ອຊົດໃຊ້ໜີ້ບາບແທນເຮົາ ພຣະອົງຊົງຖືກຄຶງແລະພຣະໂລຫິດອັນບໍລິສຸດຂອງພຣະອົງຕ້ອງໄຫຼອອກ ເພື່ອຊົດໃຊ້ໜີ້ບາບແທນເຮົາ ພຣະອົງສິ້ນພຣະຊົນແລະຖືກຝັງໃນອຸບໂມງ ແຕ່ມື້ທີສາມພຣະອົງຊົງເປັນຄືນມາຈາກຄວາມຕາຍແລະບັດນີ້ພຣະອົງຊົງປະທັບຢູ່ໃນສະຫວັນທີ່ເບື້ອງຂວາມືຂອງພຣະເຈົ້າພຣະບິດາ ການທີ່ທ່ານມີສັນຕິສຸກ ,ຄວາມຊື່ນຊົມຍິນດີ ແລະສາມາດຢືນຢູ່ຕໍ່ໜ້າຂອງ ພຣະເຈົ້າຢ່າງໝັ້ນໃຈໄດ້ນັ້ນ ພຣະເຢຊູເທົ່ານັ້ນທີ່ເປັນຄວາມຫວັງດຽວຂອງທ່ານ.

ພຣະຄຳພີສອນເຮົາວ່າ ການທີ່ເຮົາໄດ້ຮັບການຊ່ວຍເຫຼືອໃຫ້ລອດພົ້ນຈາກຄວາມບາບນັ້ນ ເຮົາຈຳເປັນຕ້ອງສາລະພາບ ແລະ ຍອມຮັບວ່າພຣະເຢຊູຊົງເປັນພຣະເຈົ້າ ແລະ ເຮົາຕ້ອງເຊື່ອດ້ວຍຄວາມຫວັງໃຈຂອງເຮົາວ່າ ພຣະເຈົ້າຊົງເຮັດໃຫ້ພຣະອົງເປັນຄືນມາຈາກຄວາມຕາຍ.

*ຖ້າທ່ານຈະຮັບດ້ວຍປາກຂອງທ່ານວ່າ ພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ ແລະເຊື່ອໃນໃຈວ່າ ພຣະເຈົ້າຊົງຊຸບພຣະອົງໃຫ້ເປັນຂຶ້ນມາຈາກຄວາມຕາຍທ່າຍຈະລອດ*

-ໂຣມ 10:9

# ການຕັດສິນໃຈຄັ້ງສຳຄັນທີ່ສຸດໃນຊີວິດ

ລັກສະນະຂອງການເຊື່ອເຊັ່ນນັ້ນ ບໍ່ໄດ້ເປັນພຽງການຍອມຮັບດ້ວຍຈິດໃຈ ແຕ່ເປັນການຍອມຮັບຈາກຫົວໃຈທີ່ແທ້ຈິງ ມີຫຼາຍຄົນທີ່ເຊື່ອວ່າມີພຣະເຈົ້າ ແຕ່ບໍ່ຍອມອຸທິດຕົວຕໍ່ພຣະເຈົ້າຊົງເປັນຜູ້ສ້າງຊີວິດແລະພຣະອົງຊົງຕ້ອງການໃຫ້ທ່ານ ມອບຖວາຍຊີວິດຂອງທ່ານໃຫ້ແກ່ພຣະອົງ ດ້ວຍຄວາມເຕັມໃຈ ພຣະເຈົ້າຊົງສ້າງທ່ານໃຫ້ມີເສລີພາບໃນການຕັດສິນໃຈ ແລະພຣະອົງຈະບໍ່ບັງຄັບທ່ານ ໃຫ້ເລືອກພຣະອົງ ແຕ່ການເລືອກ ແລະບໍ່ເລືອກຂອງທ່ານຍ່ອມສົ່ງຜົນຕໍ່ຄຸນນະພາບຊີວິດທີ່ແຕ່ຕ່າງກັນ ໃນຂະນະທີ່ທ່ານຍັງມີຊີວິດຢູ່ໃນໂລກນີ້ ແລະເປັນໂຕກຳນົດວ່າເມື່ອທ່ານຈາກໂລກນີ້ໄປແລ້ວທ່ານຈະໄປຢູ່ໃສ .

## *ການຕັດສິນໃຈຄັ້ງສຳຄັນທີ່ສຸດໃນຊີວິດ*

ທ່ານຈັດການກັບຊີວິດຂອງທ່ານໄດ້ດີທີ່ສຸດແລ້ວ ແມ່ນບໍ່ ? ຖ້າຄຳຕອບຂອງທ່ານຄືບໍ່ ແລ້ວເປັນຫຍັງທ່ານຈຶ່ງບໍ່ຫຼຽວມາຫາພຣະຜູ້ສ້າງທ່ານ ແລະຮູ້ທຸກລາຍລະ ອຽດທີ່ກ່ຽວກັບທ່ານ ຫຼາຍຍິ່ງກວ່າທີ່ທ່ານຮູ້ຈັກຕົນເອງອີກຊ້ຳ ຖ້າຂ້ອຍຊື້ໂທລະສັບມືຖືໜ່ວຍໜຶ່ງແລ້ວ ຖ້າມີບັນຫາຂຶ້ນມາຂ້ອຍຈະເອົາມັນກັບໄປໃຫ້ຄົນທີ່ຜະລິດມັນຂຶ້ນມາ ເພື່ອພວກເຂົາຈະສາມາດສ້ອມແປງມັນໄດ້ ໃນທຳນອງດຽວກັນກັບຫຼັກການຂອງພຣະເຈົ້າ ພຣະອົງສ້າງທ່ານແລະຊົງຮັກທ່ານຫຼາຍ ຖ້າຊີວິດຂອງທ່ານບໍ່ໄດ້ໃຫ້ຄວາມອີ່ມໃຈແກ່ທ່ານກໍ່ເອົາມັນກັບມາຫາພຣະເຈົ້າ ເພື່ອພຣະອົງຈະສ້ອມແປງມັນໄດ້.

ດັ່ງທີ່ຂ້ອຍໄດ້ກ່າວມາແລ້ວກ່ອນໜ້ານີ້ວ່າ ບໍ່ມີການປ່ຽນແປງໃດໆຈະເກີດຂຶ້ນ ຈົນກວ່າທ່ານຈະຕັດສິນໃຈ ທ່ານຢາກເປັນຄຣິສຕຽນບໍ່ ? ທ່ານພ້ອມທີ່ຈະມອບຊີວິດຂອງທ່ານໃຫ້ແກ່ພຣະເຈົ້າ ບໍ່ແມ່ນພຽງແຕ່ມອບຄວາມບາບຂອງທ່ານໄວ້ເທົ່ານັ້ນບໍ? ທ່ານພ້ອມທີ່ຈະປິ່ນຫຼັງກັບຈາກເສັ້ນທາງຊີວິດແຫ່ງຄວາມບາບແລະຮຽນຮູ້ທີ່ຈະດຳເນີນຊີວິດໃໝ່ກັບພຣະເຈົ້າ ແລະເພື່ອພຣະເຈົ້າບໍ ? ຖ້າແມ່ນ ຂໍໃຫ້ທ່ານອ່ານປື້ມເຫຼັ້ມນີ້ຕໍ່ໄປ ເພາະຊີວິດກຳລັງຄອຍຖ້າທ່ານຢູ່ທາງໜ້າມີສິ່ງທີ່ດີທີ່ສຸດ ທີ່ທ່ານຄາດບໍ່ເຖິງ ແຕ່ເປັນຈິງສຳລັບທຸກຄົນທີ່ຄອຍຖ້າທ່ານຢູ່ ນີ້ແມ່ນສິ່ງທີ່ພຣະເຈົ້າກ່າວໄວ້ກ່ຽວກັບອະນາຄົດຂອງທ່ານ .

# *ທາງຊີວິດໃໝ່*

*ພຣະເຈົ້າກ່າວວ່າ ເຮົາຜູ້ດຽວເທົ່ານັ້ນທີ່ຮູ້ແຜນການຂອງເຮົາສຳລັບໝູ່ເຈົ້າ ຄືແຜນ ການທີ່ນຳຄວາມຈະເລີນຮຸ່ງເຮືອງມາຍັງໝູ່ເຈົ້າ ແລະບໍ່ແມ່ນນຳຄວາມຈິບຫາຍມາຍັງໝູ່ເຈົ້າ ແຕ່ເປັນແຜນການທີ່ນຳຄວາມຫວັງມາສູ່ອະນາຄົດຂອງໝູ່ເຈົ້າ* ເຢເຣມີຢາ 29:11

ບໍ່ມີໃຜສາມາດຕັດສິນໃຈແທນທ່ານໄດ້ ມີພຽງແຕ່ທ່ານເທົ່ານັ້ນທີ່ສາມາດຕັດສິນໃຈເພື່ອຕົວທ່ານເອງ ເພາະຊີວິດເປັນຂອງທ່ານ ທ່ານຕ້ອງການ ທີ່ຈະມີຄຸນນະພາບຊີວິດແບບໃດ ? ພຣະຄຳຂອງພຣະເຈົ້າບອກວ່າ ເຮົາເຂົ້າມາໃນໂລກໂຕເປົ່າ ແລະເຮົາກໍ່ຈະຈາກໂລກໄປໂຕເປົ່າ (1ຕີໂມທຽວ 6:7) ພຣະເຈົ້າຊົງເປັນອານຟາແລະໂອເມກາ ຈຸດເລີ່ມຕົ້ນ ແລະອາວະສານ ເລີ່ມຕົ້ນດ້ວຍພຣະເຈົ້າ ແລະສິ້ນສຸດດ້ວຍພຣະເຈົ້າ ມະນຸດແຕ່ລະຄົນຕ້ອງຢືນຢູ່ຕໍ່ໜ້າພຣະເຈົ້າ ແລະລາຍງານຊີວິດຂອງຕົນເອງຕໍ່ພຣະອົງ (ໂຣມ 14:12) ດຽວນີ້ເປັນເວລາທີ່ເຮົາຕ້ອງຕຽມພ້ອມເພື່ອເວລານັ້ນ ຂ້ອຍຈະເວົ້າສະເໝີວ່າ *"ພ້ອມ ຫຼືບໍ່ພ້ອມ ເຖິງຢ່າງໃດພຣະເຢຊູກໍ່ຈະສະເດັດມາ"* ຈົ່ງຕຽມພ້ອມຕັ້ງແຕ່ເວລານີ້ ຕັດສິນໃຈຢ່າງຖືກຕ້ອງດຽວນີ້ ເພາະຖ້າຊ້າກວ່ານີ້ອາດຈະສວາຍເກີນໄປ.

# ບົດທີ 2
# ເຮົາທຸກຄົນລ້ວນເຮັດບາບ

ບາບແມ່ນການຄິດເພື່ອບໍ່ເຊື່ອຟັງພຣະເຈົ້າ ເຮົາທຸກຄົນລ້ວນແຕ່ເຮັດບາບບໍ່ມີໃຜໃນໂລກນີ້ທີ່ບໍ່ເຄີຍເຮັດບາບ (ໂຣມ3:23 , ເອເຟໂຊ 7:20) ອັນນັ້ນເປັນຂ່າວຮ້າຍ ແຕ່ກໍ່ມີຂ່າວດີຄືກັນ ເຮົາທຸກຄົນສາມາດໄດ້ຮັບການຍົກໂທດ ແລະເຮັດໃຫ້ເຮົາກາຍເປັນຜູ້ຊອບທຳຕໍ່ພຣະເຈົ້າໄດ້ .

*ເພາະເຮົາ ທຸກ ຄົນທຳບາບ ແລະເສື່ອມຈາກພຣະສີຣິຂອງພຣະເຈົ້າ ແຕ່ພຣະເຈົ້າຊົງພຣະກາລຸນາໃຫ້ເຂົາເປັນຜູ້ຊອບທຳໂດຍມີມູນຄ່າ ໂດຍພຣະເຢຊູຄຣິດໄຖ່ເຂົາໃຫ້ພົ້ນບາບແລ້ວ*

*(ໂຣມ 3:23-24)*

ພຣະເຢຊູໄດ້ຊົດໃຊ້ໜີ້ບາບຂອງທ່ານໝົດແລ້ວ ສິ່ງທີ່ທ່ານຈຳເປັນຕ້ອງເຮັດຄືເຊື່ອແລະຮັບເອົາໄວ້ ຖ້າທ່ານຈະຍອມມອບຄວາມບາບຂອງທ່ານ ຂໍໃຫ້ທ່ານເສຍໃຈ ແລະ ເຕັມໃຈຫັນກັບຈາກຄວາມບາບເຫຼົ່ານັ້ນພຣະເຈົ້າຈະຍົກໂທດໃຫ້ທ່ານ ແລະເຮັດໃຫ້ທ່ານເປັນຄົນໃໝ່.

## *ເສັ້ນທາງຊີວິດໃໝ່*

*ຖ້າເຮົາສາລະພາບບາບຂອງເຮົາ ພຣະອົງຊົງສັດຊື່ແລະທ່ຽງທຳ ກໍ່ຈະຊົງໂຜດຍົກຍາຍຂອງເຮົາແລະຈະຊົງຊຳລະເຮົາໃຫ້ພົ້ນຈາກການອະທຳທັ້ງສິ້ນ* 1ໂຢຮັນ 1:9

ທ່ານບໍ່ຈຳເປັນຕ້ອງຄອຍຖ້າໃຫ້ພຣະເຈົ້າເຮັດຫຍັງບາງຢ່າງ ພຣະອົງໄດ້ເຮັດໃນສິ່ງທີ່ຈຳເປັນຕ້ອງເຮັດແລ້ວ ພຣະອົງຊົງປະທານພຣະບຸດອົງດຽວຂອງພຣະອົງລົງມາຕາຍແທນເຮົາ ເພາະບໍ່ພຽງເຄື່ອງບູຊາທີ່ໄຮ້ຕຳນິແລະບໍ່ມີບາບເທົ່ານັ້ນ ທີ່ສາມາດຊົດໃຊ້ໜີ້ແຫ່ງການກະທຳຜິດຂອງພວກເຮົາໄດ້ Justice has been satisfied, ແລະເຮົາສາມາດເປັນອິດສະຫຼະໄດ້ ໂດຍການເຊື່ອໃນພຣະເຢຊູຄຣິດ ແລະໂດຍການເຂົ້າສູ່ຄວາມສຳພັນທີ່ສະໜິດສະໜົມກັບພຣະເຈົ້າຜ່ານທາງພຣະອົງ ດ້ວຍຕົວຂອງເຮົາເອງເຮົາບໍ່ສາມາດເຂົ້າໄປຫາພຣະເຈົ້າໄດ້ ເຮົາຕ້ອງການທະນາຍຄວາມ ເຮົາຕ້ອງການໃຜຈັກຄົນທີ່ເປັນຄົນກາງແລະຄົນຜູ້ນັ້ນ ຄືພຣະເຢຊູ ພຣະເຢຊູເປັນຄົນກາງທີ່ຢືນຢູ່ໃນຊ່ອງຫວ່າງ ທີ່ເກີດຈາກຄວາມບາບ ເຊິ່ງຂັ້ນຢູ່ລະຫວ່າງເຮົາກັບພຣະເຈົ້າ ແລະຊົງເປັນຜູ້ນຳເຮົາມາເຖິງພຣະເຈົ້າ.

ຄືກັນກັບລູກ ທີ່ມີເຊື້ອສາຍຂອງພໍ່ໃນໂຕຂອງລາວ ( ສາຍເລືອດ , ດີເອັນເອ, ໂຄຣໂມໂຊມແລະອື່ນໆ)ດັ່ງນັ້ນ ພຣະເຈົ້າຜູ້ຢູ່ໃນພຣະຄຣິດກຳລັງນຳໂລກທີ່ຫຼົງ ທາງໄປກັບມາຫາພຣະອົງເອງ ພຣະເຈົ້າຊົງຮັກທຸກຄົນທີ່ພຣະອົງຊົງສ້າງແລະບໍ່ຊົງຕ້ອງການທີ່ຈະເຫັນພວກເຂົາຕ້ອງຖືກຂາຍໄປເປັນທາດເພື່ອຊົດໃຊ້ໜີ້ຄວາມບາບ ດັ່ງນັ້ນ, ພຣະອົງຈຶ່ງຊົງຈັດຕຽມທາງອອກໃຫ້ແກ່ພວກເຂົາ ແລະ ທາງອອກນັ້ນກໍ່ຄື ພຣະເຢຊູຄຣິດ !

# ຄວາມບາບນຳຄຳສາບແຊ່ງເຂົ້າມາ

ພຣະຄຳຂອງພຣະເຈົ້າບອກວ່າ ຄວາມບາບຂອງເຮົາຈະເຮັດໃຫ້ເຮົາຄົ້ນພົບ( ຈົດເຊັນບັນຊີ 32:33) ຄວາມບາບນຳຄຳສາບແຊ່ງເຂົ້າມາແລະການເຊື່ອຟັງນຳພຣະພອນມາໃຫ້ (ພຣະບັນຍັດສອງ 28) ອາດຈະມີຊົ່ວໄລຍະໜຶ່ງທີ່ເບິ່ງຄືວ່າຄົນທີ່ເຮັດບາບຍັງຄົງຢູ່ສະບາຍ ແຕ່ສຸດທ້າຍຈະມີຫຼັກຖານມັດໂຕຈາກສິ່ງທີ່ພວກເຂົາເລືອກນັ້ນ.

ເມື່ອເຮົາເລືອກມີຊີວິດທີ່ເຮັດບາບ ຫຼາຍກວ່າການເຊື່ອຟັງພຣະເຈົ້າຈິດໃຈຂອງເຮົາກໍ່ຈະພົບຄວາມທຸກຍາກ ມະນຸດນັ້ນບໍ່ໄດ້ມີພຽງແຕ່ຮ່າງກາຍທີ່ປະກອບມີເນື້ອໜັງແລະກະດູກ ແຕ່ມີວິນຍານ ແລະຈິດໃຈ ເຊິ່ງປະກອບມີຄວາມຄິດ,ເຈຕະນາແລະອາລົມ ນັ້ນແມ່ນລັກສະນະສະເພາະໂຕຂອງມະນຸດ ຄົນບາບຈະມີຈິດໃຈທີ່ທົນທຸກ ເຕັມໄປດ້ວຍຄວາມໃຈຮ້າຍບໍ່ວ່າພວກເຂົາຈະເຮັດຫຍັງຫຼືຄອບຄອງອັນໃດ ພວກເຂົາກໍ່ບໍ່ມີຄວາມອີ່ມໃຈໃນສິ່ງເຫຼົ່ານັ້ນເລີຍ ພວກເຂົາມີບັນຫາດ້ານອາລົມ ນັບຈາກມື້ທີ່ພວກເຂົາເລືອກເຮັດຕາມໃຈໂຕເອງ ພວກເຂົາກໍ່ກາຍເປັນຄົນທໍ້ຖອຍແລະໃຈຮ້າຍງ່າຍ ເມື່ອສິ່ງຕ່າງໆບໍ່ເປັນໄປຕາມທີ່ພວກເຂົາຕ້ອງການ ພວກເຂົາບໍ່ຮູ້ສິ່ງໃດເລີຍກ່ຽວກັບວິທີທາງແຫ່ງຄວາມເຊື່ອ ພວກເຂົ້າບໍ່ເຂົ້າໃຈອີກວ່າການວາງໃຈພຣະເຈົ້າເປັນພະລັງອຳນາດທີ່ຍິ່ງໃຫຍ່ກວ່າ ການວາງໃຈຕົນເອງ ພວກເຂົາຈະບໍ່ເຄີຍມີຈິດໃຈທີ່ພັກສະຫງົບ ເພາະການພັກສະຫງົບນັ້ນ ເກີດຂຶ້ນໄດ້ໂດຍຜ່ານການເຊື່ອໃນພຣະອົງເທົ່ານັ້ນ (ເຮັບເຣີ4:3).

ຊີວິດແຫ່ງຄວາມບາບເປັນຊີວິດທີ່ເຕັມໄປດ້ວຍຄຳສາບແຊ່ງ ບໍ່ມີສິ່ງດີໃດໆມາຈາກຄວາມບາບເລີຍ ນີ້ແມ່ນສິ່ງທີ່ພຣະເຈົ້າຊົງກ່າວໄວ້ ເຖິງຜົນທີ່ເກີດຂຶ້ນກັບບຸກຄົນທີ່ດຳເນີນຊີວິດໂດຍປາດສະຈາກພຣະອົງ.

## *ທາງຊີວິດໃໝ່*

*ພຣະຜູ້ເປັນເຈົ້າກ່າວວ່າເຮົາຈະນຳໄພພິບັດເຊັ່ນວ່ານັ້ນ ເຊິ່ງທຸກຄົນຈະງົມທາວໄປມາ ດັ່ງຄົນຕາບອດ ເຂົາໄດ້ເຮັດບາບຕໍ່ສູ້ເຮົາ; ບັດນີ້ເລືອດເຂົາຈະຖືກຖອກຖິ້ມດັ່ງຖອກນໍ້າແລະຊາກສົບຂອງຄົນຕາຍຈະເບີຍເນົ່າເໝັນຢູ່ຕາມ ຢູ່ຕາມພື້ນດິນ" ໃນມື້ນັ້ນ ເມື່ອພຣະຜູ້ເປັນເຈົ້າລະບາຍຄວາມໂກດຮ້າຍໃຫຍ່ຂອງພຣະອົງແມ່ນແຕ່ເງິນແລະຄຳທັງໝົດທີ່ເຂົາມີຢູ່ກໍ່ຈະຊ່ວຍເຂົາຫຍັງບໍ່ໄດ້ ແຜ່ນດິນໂລກທັງໝົດຈະຖືກທຳລາຍ ດ້ວຍໄຟແຫ່ງຄວາມໂກດຮ້າຍຂອງພຣະອົງ ພຣະອົງຈະໃຫ້ເຖິງທີ່ສິ້ນສຸດ ຄືການສິ້ນສຸດຢ່າງກະທັນຫັນແກ່ທຸກໆຄົນທີ່ອາໄສຢູ່ເທິງແຜ່ນດິນໂລກນີ້* (ເສຟານີຢາ1:17-18)

ຂໍ້ພຣະຄຳພີນີ້ເບິ່ງຄືເປັນຕາຢ້ານ ແຕ່ມັນບໍ່ເປັນຕາຢ້ານສຳລັບຜູ້ທີ່ເຊື່ອໃນພຣະເຢຊູຄຣິດ ດ້ວຍຄວາມຈິງໃຈ ຜູ້ທີ່ເຊື່ອໃນພຣະເຢຊູຈະບໍ່ຕ້ອງຖືກພິພາກສາ (ໂຢຮັນ 3:18)

## ຄວາມຮູ້ສຶກຜິດແລະການລົງໂທດ

ຄວາມຮູ້ສຶກຜິດນັ້ນເປັນສ່ວນຂອງຄົນບາບ ເຂົາອາດຈະພະຍາຍາມເຮັດຫຼາຍສິ່ງຫຼາຍຢ່າງເພື່ອປົກປິດມັນ ແຕ່ເລິກໆພາຍໃນໃຈແລ້ວ ເຂົາຮູ້ສຶກສະເໝີວ່າເຂົາເຮັດຜິດ ພຣະເຢຊູກ່າວວ່າ ຄົນບາບບໍ່ສາມາດໜີພົ້ນຄວາມຮູ້ສຶກຜິດໄດ້ (ໂຢຮັນ9:41) .

ພຣະຄໍາພີແບ່ງອອກເປັນ ພາກພະສັນຍາເດີມແລະ ພຣະສັນຍາໃໝ່ ໂດຍພາກພຣະສັນຍາເດີມ ເປັນສັນຍາທີ່ພຣະເຈົ້າຊົງໃຊ້ ເພື່ອປົກຄຸມຄວາມບາບຂອງປະຊາກອນ ຈົນຮອດພຣະເຢຊູຊົງສະເດັດມາເພື່ອສະຖາປານາພຣະສັນຍາໃໝ.

## *ເຮົາທຸກຄົນລ້ວນເຮັດບາບ*

ໂດຍຜ່ານລະບົບການຖວາຍເຄື່ອງບູຊາສໍາລັບຄວາມບາບ ໃນຍຸກພຣະສັນຍາເດີມ ຄວາມບາບຂອງປະຊາກອນໄດ້ຮັບການປົກຄຸມ ແຕ່ບໍ່ຖືກລົບລ້າງແລະຄວາມຮູ້ສຶກຜິດນັ້ນກໍ່ຍັງຄົງຢູ່ ແຕ່ໃນຍຸກພຣະສັນຍາໃໝ່ ພາຍໃຕ້ພຣະສັນຍາໃໝ່ ເຮົາມີເຄື່ອງບູຊາອັນສົມບູນແລະເປັນເຄື່ອງບູຊາສຸດທ້າຍທີ່ບໍ່ໄດ້ພຽງແຕ່ປົກຄຸມຄວາມບາບ ແຕ່ລົບລ້າງຄວາມບາບຂອງເຮົາອອກໄປຢ່າງສິ້ນເຊີງ ແລະບໍ່ໄດ້ພຽງແຕ່ຊໍາລະລ້າງຄວາມບາບຂອງເຮົາເທົ່ານັ້ນ ແຕ່ຊໍາລະຄວາມຮູ້ສຶກຜິດທີ່ມາພ້ອມຄວາມບາບນັ້ນອີກດ້ວຍ

ຂໍໃຫ້ທ່ານອ່ານຂໍ້ພຣະຄໍາພີຕໍ່ໄປນີ້ ຊ້າໆ ແລະຄື້ນຄິດເຖິງຣິດອໍານາດຂອງສິ່ງທີ່ບອກໄວ້ໃນຂໍ້ພຣະຄໍາພີ ຈາກພຣະຄໍາ ເຮັບເຣີ ບົດທີ 10

*ແລະໂດຍນໍ້າພຣະໄທນັ້ນແຫຼະ ພວກເຮົາຈຶ່ງໄດ້ຮັບການຊໍາລະໃຫ້ບໍລິສຸດ ດ້ວຍການຖວາຍພຣະກາຍຂອງພຣະເຢຊູຄຣິດເຈົ້າເທື່ອດຽວເທົ່ານັ້ນເປັນການສິ້ນສຸດ* (ເຮັບເຣີ10:10)

*ແຕ່ເມື່ອພຣະຄຣິດໄດ້ຖວາຍເຄື່ອງບູຊາຄັ້ງດຽວເພື່ອຊໍາລະລ້າງບາບກໍແລ້ວ ເປັນການຖວາຍເຊິ່ງນໍາໃຊ້ໄດ້ຕະຫຼອດໄປ , ແລ້ວພຣະອົງກໍ່ນັ່ງລົງທີ່ເບື້ອງຂວາພຣະຫັດຂອງພຣະເຈົ້າ* (ເຮັບເຣີ10:12)

*ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ ອັນນີ້ແມ່ນພັນທະສັນຍາທີ່ເຮົາຈະເຮັດ ກັບເຂົາເຫຼົ່ານັ້ນ ຄືໃນວັນທັງຫຼາຍ ຈະມາເຖິງນັ້ນ ເຮົາຈະເອົາກົດບັນຍັດຂອງເຮົາໃສ່ໄວ້ໃນໃຈຂອງພວກເຂົາແລະຂຽນຂໍ້ຄວາມໃສ່ເທິງຫົວໃຈຂອງເຂົາເຈົ້າ ພຣະອົງຊົງກ່າວຕໍ່ໄປວ່າ , ເຮົາຈະບໍ່ຈົດຈຳຄວາມບາບ ແລະການອະທຳຂອງພວກເຂົາອີກຕໍ່ໄປຈັກເທື່ອ* (ເຮັບເຣີ10:16-17)

## *ທາງຊີວິດໃໝ່*

*ດັ່ງນັ້ນ ຈົ່ງໃຫ້ພວກເຮົາເຂົ້າມາໃກ້ດ້ວຍຄວາມຈິງໃຈ ແລະດ້ວຍຄວາມເຊື່ອໝັ້ນອັນເຕັມບໍລິບູນ ດ້ວຍໃຈທີ່ໄດ້ຮັບການຊຳລະຈາກຄວາມຮູ້ສຶກວ່າຕົນມີບາບ ແລະມີຮ່າງກາຍທີ່ໄດ້ຊຳລະລ້າງແລ້ວດ້ວຍນ້ຳບໍລິສຸດ* (ເຮັບເຣີ10:22)

ຂໍ້ພຣະຄຳພີເຫຼົ່ານີ້ບອກໃຫ້ເຮົາຮູ້ເຖິງສິ່ງສຳຄັນແລະງົດງາມຫຼາຍຢ່າງອັນທຳອິດຄືການທີ່ພຣະເຢຊູຊົງສະເດັດມາເປັນເຄື່ອງບູຊາໄຖ່ບາບໃຫ້ແກ່ພວກເຮົາຢ່າງສົມບູນ ບໍ່ມີເຄື່ອງບູຊາອື່ນໃດອີກແລ້ວ ພາຍໃຕ້ພຣະສັນຍາເດີມຕ້ອງມີການຖວາຍເຄື່ອງບູຊາແລ້ວຖວາຍອີກ ແຕ່ກໍ່ບໍ່ສາມາດລົບລ້າງຄວາມຮູ້ສຶກຜິດອອກໄປໄດ້ ພຣະເຢຊູຊົງສະເດັດມາເປັນເຄື່ອງບູຊາຕະຫຼອດການ ທີ່ສາມາດລົບລ້າງຄວາມບາບທັງຄວາມຮູ້ສຶກຜິດອອກໄປໄດ້ .

ໂດຍທາງກົດນັ້ນຄວາມຮູ້ສຶກຜິດໄດ້ຖືກລົບລ້າງອອກໄປແລ້ວແຕ່ເຮົາອາດຮຽນຮູ້ວິທີການດຳເນີນຊີວິດທີ່ເປັນອິດສະຫຼະຈາກຄວາມຮູ້ສຶກ ຜິດທີ່ຈິງແລ້ວຜູ້ທີ່ມີຊີວິດໃໝ່ທີ່ຢູ່ເພື່ອພຣະຄຣິດນັ້ນຈຳເປັນຕ້ອງຮຽນຮູ້ວິທີການດຳເນີນຊີວິດ ທີ່ກົງກັນຂ້າມກັບຄວາມຮູ້ສຶກ ພວກເຂົາບໍ່ສາມາດປ່ອຍໃຫ້ຄວາມຮູ້ສຶກຄວບຄຸມຊີວິດໄດ້ອີກຕໍ່ໄປ ພວກເຂົາຕ້ອງຮຽນຮູ້ພຣະຄຳຂອງພຣະເຈົ້າແລະກະທຳຕາມບໍ່ວ່າພວກເຂົາຈະຮູ້ສຶກແນວໃດກໍ່ຕາມ ຊີວິດແຫ່ງການເຊື່ອຟັງນີ້ນຳພຣະພອນໃຫຍ່ທີ່ຈະຫາສິ່ງໃດມາທຽບກໍ່ບໍ່ໄດ້ .

# ບົດທີ 3

# ເຖິງເວລາແລ້ວທີ່ຈະຍອມຈຳນົນ

ຖ້າທ່ານຕ້ອນຮັບພຣະຄຣິດແລ້ວ ແລະຊຽນຈົດໝາຍມາຂໍປຶ້ມເຫຼັ້ມນີ້ ເພື່ອຊ່ວຍທ່ານໃນການດຳເນີນຊີວິດໃໝ່ກັບພຣະຄຣິດຫຼືຖ້າທ່ານຍັງບໍ່ທັນ ຕ້ອນຮັບພຣະຄຣິດແລ້ວມີຄົນມາແຈກປຶ້ມເຫຼັ້ມນີ້ໃຫ້ທ່ານ ຂ້ອຍຫັວງເປັນຢ່າງຍິ່ງວ່າ ເມື່ອທ່ານອ່ານມາເຖິງໜ້ານີ້ ທ່ານກໍ່ພ້ອມທີ່ຈະຕັດສິນໃຈແລ້ວ

ໂຢຮັນ 3:16 *"ເພາະວ່າພຣະເຈົ້າຊົງຮັກໂລກຫຼາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນ ຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫຼອດໄປເປັນນິດ"*

ຂໍໃຫ້ຂ້ອຍເລົ່າເລື່ອງໜຶ່ງ ທີ່ຈະຊ່ວຍໃຫ້ທ່ານມີຄວາມເຂົ້າໃຈເຖິງຣິດອຳນາດຂອງພຣະເຈົ້າໃນພຣະຄຳພີນັ້ນ.

ຄືນໜຶ່ງອັນໜາວເຢັນແລະມີຫິມມະຕົກໃນເມືອງ ຊິຄາໂກ້ ເດັກນ້ອຍຜູ້ຊາຍຄົນໜຶ່ງ ກຳລັງຂາຍໜັງສືພິມຢູ່ແຄມທາງ ຄົນທັງຫຼາຍພາກັນຢູ່ແຕ່ພາຍໃນເຮືອນເພື່ອຫຼີກຄວາມໜາວ ທ້າວນ້ອຍຜູ້ນີ້ໜາວຫຼາຍ ຈຶ່ງບໍ່ຝືນຂາຍໜັງສືພິມຕໍ່ ລາວຈຶ່ງຍ່າງໄປຫາຕຳຫຼວດຄົນໜຶ່ງແລະຖາມວ່າ "ທ່ານຕຳຫຼວດເອີ້ຍ ທ່ານຮູ້ບໍວ່າມີເດັກທີ່ທຸກຍາກຄົນໜຶ່ງ ຈະຫາບ່ອນອຸ່ນໆພັກເພື່ອນອນຫຼັບຄືນນີ້ຈັກຄືນໜຶ່ງໄດ້ຢູ່ໃສ?

ຂ້ອຍນອນໃນແກັດເຈ້ຍ ທີ່ຢູ່ແຈຖະໜົນທາງເຂົ້າຊອຍແຄບໆນັ້ນ ອາກາດມັນໜາວແຮງແທ້ໆ ຄືຊິດີຫຼາຍ ຖ້າຄືນນີ້ຂ້ອຍຊິໄດ້ນອນຫຼັບໃນບ່ອນທີ່ອຸ່ນໆ ຈັກຄືນ"

ຕຳຫຼວດຜູ້ນັ້ນເບິ່ງໜ້າທ້າວນ້ອຍຄົນນີ້ແລະເວົ້າວ່າ "ເອົາຈັ່ງຊີ້ ຂ້ອຍຊິບອກໃຫ້ວ່າໂຕຈະຕ້ອງເຮັດແນວ ໂຕກໍ່ຍ່າງລົງໄປຕາມຖະໜົນນີ້ໄປເຮືອນຫຼັງໃຫຍ່ສີຂາວຫຼັງຫັ້ນເດີ້ ເມື່ອໄປເຖິງກໍ່ເຄາະປະຕູເອີ້ນເຈົ້າຂອງເຮືອນພໍ ພວກເຂົາອອກມາໃຫ້ໂຕເວົ້າວ່າ ໂຢຮັນ 3:16 ແລ້ວພວກເຂົາຈະໃຫ້ໂຕເຂົ້າໄປໃນບ້ານນັ້ນເອງແຫຼະ"

ທ້າວນ້ອຍນີ້ກໍ່ເຮັດຕາມທີ່ຕຳຫຼວດບອກລາວຍ່າງຊື່ໄປເຮືອນນັ້ນແລະເຄາະປະຕູ ມີແມ່ຍິງຄົນໜຶ່ງຂານຕອບລາວແນມເບິ່ງແລະເວົ້າວ່າ "ໂຢຮັນ 3:16" ແມ່ຍິງຄົນນັ້ນເວົ້າວ່າ "ເຂົ້າມາແມ້"

ນາງພາເຂົ້າໄປໃນເຮືອນແລະໃຫ້ລາວນັ່ງຕັ່ງອີ້ໂຍກໜ້າເຕົາຜີງໄຟຂະໜາດໃຫຍ່ ນາງປະໃຫ້ລາວນັ່ງຢູ່ຫັ້ນ ລາວກໍ່ນັ່ງຢູ່ຫັ້ນດົນເຕີບ ຈຶ່ງເລີ່ມຄິດວ່າ "ໂຢຮັນ 3:16 ຂ້ອຍບໍ່ເຄີຍເຂົ້າໃຈວ່າມັນແມ່ນຫຍັງ ແຕ່ມັນກໍ່ເຮັດໃຫ້ທ້າວນ້ອຍທີ່ໜາວໄດ້ຮັບຄວາມອົບອຸ່ນ"

ຕໍ່ມາແມ່ຍິງຄົນນັ້ນກໍ່ເຂົ້າມາແລະຖາມລາວວ່າ "ເຈົ້າຫິວບໍ ? "

ລາວຕອບວ່າຫິວແລະເມື່ອຍຫຼາຍ ເພາະຂ້ອຍບໍ່ໄດ້ກິນຫຍັງມາສອງມື້ແລ້ວ ຂ້ອຍຄິດວ່າຄືຊິມີແຮງຢືນຂຶ້ນຖ້າໄດ້ກິນທານຈັກໜ້ອຍໜຶ່ງ"ແມ່ຍິງຄົນນັ້ນກໍ່ພາລາວໄປທີ່ຫ້ອງຄົວແລະໃຫ້ລາວນັ່ງລົງ ເທິງໂຕະເຕັມໄປດ້ວຍອາຫານພິເສດ ລາວຈຶ່ງກິນອາຫານເຫຼົ່ານັ້ນ ກິນແລ້ວກິນອີກ ກິນຈົນວ່າລາວບໍ່ສາມາດກິນໄດ້ອີກເພາະອີ່ມໂພດ ຕອນນັ້ນລາວຈຶ່ງຄິດອີກວ່າ "ໂຢຮັນ 3:16 ຂ້ອຍບໍ່ເຂົາໃຈເລີຍວ່າມັນແມ່ນຫຍັງ ແຕ່ມັນກໍ່ເຮັດໃຫ້ເດັກນ້ອຍທີ່ຫິວໂຫຍອີ່ມໜຳແທ້ໆ"

ແມ່ຍິງຄົນນັ້ນພາລາວຂຶ້ນໄປເທິງເຮືອນໄປອາບນ້ຳແລະຮຸກຖູໂຕໃຫ້ລາວນັ່ງຢູ່ໃນນ້ຳຈັກບຶດໜຶ່ງແລະຄິດວ່າ ໂຢຮັນ 3:16 ຂ້ອຍບໍ່ເຂົ້າໃຈເລີຍວ່າມັນແມ່ນຫຍັງ ແຕ່ມັນເຮັດໃຫ້ເດັກນ້ອຍທີ່ເປື້ອນເປິສະອາດໄດ້ " ແມ່ຍິງຄົນນັ້ນກັບເຂົ້າມາເອົາລາວຂຶ້ນຈາກອ່າງນ້ຳ ແຕ່ງໂຕ ແລະພາລາວໄປຫ້ອງໜຶ່ງນາງພາລາວໄປນອນເທິງບ່ອນນອນທີ່ໜານຸ້ມ ຫຼັງຈາກນັ້ນກໍ່ເອົາຜ້າຫົ່ມຕູ້ມໃຫ້ຈົນແຈບແລ້ວກໍ່ຈູບລາລາວກ່ອນນອນ ນາງກໍ່ມອດໄຟແລະອອກໄປ ໃນຂະນະທີ່ທ້າວນ້ອຍນອນຢູ່ໃນຫ້ອງທີ່ມືດນັ້ນ ລາວເອງແນມອອກໄປນອກປ່ອງຢ້ຽມເຫັນຫິມມະກຳລັງຕົກ ໃນຄ່ຳຄືນທີ່ອາກາດໜາວເຢັນ ລາວຄິດອີກຄັ້ງໜຶ່ງວ່າ " ໂຢຮັນ 3:16 ຂ້ອຍບໍ່ເຂົ້າໃຈເລີຍວ່າມັນແມ່ນຫຍັງ ແຕ່ມັນເຮັດໃຫ້ເດັກນ້ອຍທີ່ອິດເມື່ອຍໄດ້ຫຼັບສະບາຍ"

ຕື່ນເຊົ້າມາ ນາງຈຶ່ງພາລາວລົງມາທີ່ໂຕະ ທີ່ເຕັມໄປດ້ວຍອາຫານອີກຫຼັງຈາກທີ່ລາວກິນອາຫານແລ້ວ ນາງກໍ່ພາລາວໄປນັ່ງຢູ່ເທິງຕັ່ງອີ້ໂຍກໂຕເກົ່າທີ່ໜ້າເຕົາຜີງໄຟນັ້ນ ນາງຈັບພຣະຄຳພີມາເຫຼັ້ມໜຶ່ງມາແລະນັ່ງຂ້າງລາວພ້ອມທັງຖາມທ້າວນ້ອຍນັ້ນວ່າ "ເຈົ້າເຂົ້າໃຈບໍວ່າ ໂຢຮັນ 3:16 ແມ່ນຫຍັງ? " ລາວຕອບວ່າ "ບໍ່ເຂົ້າໃຈ ມື້ຄືນນີ້ຂ້ອຍໄດ້ຍິນເປັນເທື່ອທຳອິດຕອນທີ່ຕຳຫຼວດຜູ້ນັ້ນບອກໃຫ້ຂ້ອຍໃຊ້ມັນ" ນາງຈຶ່ງເປີດພຣະຄຳພີໂຢຮັນ 3:16 ແລະເລີ່ມຕົ້ນອະທິບາຍເລື່ອງກ່ຽວກັບພຣະເຢຊູ ໃຫ້ລາວຟັງຢູ່ບ່ອນນັ້ນໜ້າເຕົາຜີງໄຟຂະໜາດໃຫຍ່ ລາວໄດ້ມອບຫົວໃຈ ແລະຊີວິດຂອງລາວໃຫ້ແກ່ພຣະເຢຊູ ລາວນັ່ງຢູ່ບ່ອນນັ້ນແລະຄິດອີກເທື່ອໜຶ່ງວ່າ "ໂຢຮັນ 3:16 ຂ້ອຍບໍ່ເຂົ້າໃຈເລີຍວ່າມັນມີແມ່ນຫຍັງ ແຕ່ມັນເຮັດໃຫ້ເດັກທີ່ຫຼົງທາງຄົນນີ້ໄດ້ຮັບຄວາມລອດ " (ຂຽນໂດຍເດັກໜຸ່ມນິລະນາມ)

ເວລານີ້ຖ້າທ່ານພ້ອມແລ້ວທີ່ຈະມອບຊີວິດຂອງທ່ານໃຫ້ແກ່ພຣະເຈົ້າ ດ້ວຍດ້ວຍການຕ້ອນຮັບພຣະບຸດຂອງພຣະອົງຄື ພຣະເຢຊູຄຣິດໃນຖານະ ເຄື່ອງບູຊາດຽວທີ່ໄຖ່ບາບທ່ານໄດ້ ຂ້ອຍຂໍໃຫ້ທ່ານອະທິຖານນຳຂ້ອຍ ຂໍໃຫ້ທ່ານອະທິຖານອອກສຽງ ແລະຟັງໃນສິ່ງທີ່ທ່ານອະທິຖານຢູ່ນັ້ນ ເພາະເປັນສິ່ງທີ່ມີຄວາມໝາຍຫຼາຍຕໍ່ຊີວິດຂອງທ່ານ.

*ພຣະບິດາຈົ້າ ລູກຮັກພຣະອົງ ມື້ນີ້ລູກເຂົ້າມາຫາພຣະອົງດ້ວຍຄວາມເຊື່ອ ແລະທູນຂໍພຣະອົງເພື່ອຍົກໂທດຄວາມບາບຂອງລູກ ພຣະເຢຊູລູກເຊື່ອໃນພຣະອົງ ລູກເຊື່ອວ່າພຣະອົງຊົງຍອມຕາຍເທິງໄມ້ກາງແຂນເພື່ອລູກ ພຣະອົງຍອມໃຫ້ໂລຫິດອັນບໍລິສຸດຂອງພຣະອົງໄຫຼອອກເພື່ອລູກ ພຣະອົງຊົງຮັບໂທດທັງໝົດແທນລູກແລ້ວ ລູກເຊື່ອວ່າພຣະອົງຊົງສິ້ນພຣະຊົນຖືກຝັງ ແລະຊົງເປັນຄືນມາໃໝ່ໃນວັນທີສາມ ຄວາມຕາຍບໍ່ສາມາດເອົາຊະນະພຣະອົງໄດ້ ພຣະອົງຊົງມີໄຊຊະນະເໜືອຜີມານຊາຕານ ແລະຊົງຍຶດກຸນແຈແຫ່ງນາລົກ ແລະຄວາມຕາຍຈາກພວກມັນແລ້ວ*

## *ທາງຊີວິດໃໝ່*

*ລູກເຊື່ອວ່າ ການທີ່ພຣະອົງຊົງກະທຳທຸກສິ່ງເຫຼົ່ານີ້ ກໍ່ເພາະຊົງຮັກລູກ ລູກຕ້ອງການເປັນຄຣິສຕຽນ ລູກຕ້ອງການຮັບໃຊ້ພຣະອົງຕະຫຼອດຊີວິດຂອງລູກ ລູກຢາກຮຽນຮູ້ວິທີການດຳເນີນຊີວິດໃໝ່ ຄືກັບທີ່ພຣະອົງຊົງສັນຍາໄວ້ ພຣະເຢຊູເວລານີ້ລູກຂໍຕ້ອນຮັບພຣະອົງແລະລູກຂໍມອບຖວາຍຕົວເອງໃຫ້ແກ່ພຣະອົງ ຂໍຊົງນຳລູກໄປຕາມທາງທີ່ພຣະອົງມີໃຫ້ແກ່ລູກແລະຂໍຊົງສ້າງລູກໃຫ້ເປັນຄືກັບ ທີ່ພຣະອົງຊົງຕ້ອງການໃຫ້ລູກເປັນດ້ວຍເທີ້ນ*

*ເຖິງເວລາແລ້ວທີ່ຈະຍອມຈຳນົນ*

*ຂອບຄຸນພຣະເຢຊູ ທີ່ຊົງຊ່ວຍລູກໃຫ້ລອດພົ້ນ ຂໍຊົງເຕີມລູກໃຫ້ເຕັມດ້ວຍພຣະວິນຍານບໍລິສຸດ ແລະຂໍຊົງສອນທຸກສິ່ງ ທີ່ລູກຈຳເປັນຕ້ອງຮູ້ ເວລານີ້ລູກເຊື່ອແລ້ວວ່າລູກໄດ້ຮັບຄວາມລອດ ລູກບັງເກີດໃໝ່ແລ້ວແລະເມື່ອລູກຕາຍລູກຈະໄດ້ໄປຢູ່ສະຫວັນ ພຣະບິດາເຈົ້າລູກກຳລັງມີຄວາມຊື່ນຊົມກັບຊີວິດທີ່ເຫຼືອຢູ່ແລະລູກຈະຢູ່ເພື່ອຖວາຍກຽດແດ່ພຣະອົງ.*

ຖ້າທ່ານອະທິຖານຕາມຄຳອະທິຖານນີ້ດ້ວຍຄວາມຈິງໃຈແລ້ວທ່ານກໍ່ໄດ້ຕັດສິນໃຈເຮັດໃນສິ່ງທີ່ສຳຄັນທີ່ສຸດໃນຊີວິດບໍ່ວ່າທ່ານຈະຮູ້ສຶກແນວໃດ ພຣະເຈົ້າຊົງໄດ້ຍິນຄຳອະທິຖານຂອງທ່ານແລະຊົງຕອບຄຳອະທິຖານນັ້ນ ທ່ານອາດຈະຮູ້ສຶກສຳພັດໄດ້ເຖິງສັນຕິສຸກແລະຄວາມຊື່ນຊົມຍິນດີ, ຜ່ອນຄາຍແລະມີອິດສະຫຼະ ຫຼືທ່ານອາດຈະບໍ່ຮູ້ສຶກຫຍັງເລີຍກໍ່ມີ ຢ່າຍອມໃຫ້ຄວາມຮູ້ສຶກຄວບຄຸມຊີວິດຂອງທ່ານອີກຕໍ່ໄປຈົ່ງເຊື່ອໃນພຣະຄຳພຣະເຈົ້າ ເພາະພຣະອົງຊົງສັດຊື່ແລະຮັກສາຄຳສັນຍາຂອງພຣະອົງພຣະອົງກ່າວວ່າ *"ສິ່ງສາລະພັດທີ່ພຣະບິດາເຈົ້າມອບໃຫ້ແກ່ເຮົາ ກໍ່ຈະມາຫາເຮົາ ແລະຜູ້ທີ່ມາຫາເຮົາ ເຮົາຈະບໍ່ຖິ້ມອອກໄປນອກຈັກເທື່ອ"* ໂຢຮັນ 6:37

ພຣະເຈົ້າຊົງສັນຍາວ່າ ຈະຢູ່ກັບທ່ານຕະຫຼອດໄປຈົນກວ່າສິ້ນຍຸກ ທ່ານອາດຈະບໍ່ຮູ້ສຶກແນວນັ້ນ ແຕ່ພຣະອົງຊົງຢູ່ນຳທ່ານທຸກແຫ່ງທຸກເວລາ ພຣະອົງຊົງເຝົ້າເບິ່ງທ່ານດ້ວຍຄວາມເອົາໃຈໃສ່ສະເໝີ ພຣະອົງຊົງສົນໃຈໃນທຸກເລື່ອງທີ່ກ່ຽວຂ້ອງກັບທ່ານ ແລະພຣະອົງຊົງສັນຍາວ່າ ຈະເຮັດໃຫ້ທຸກສິ່ງເຫຼົ່ານັ້ນສົມບູນ ພຣະອົງຊົງເລີ່ມຕົ້ນການດີໃນທ່ານແລ້ວ ພຣະອົງຈະຊົງກະທຳໃຫ້ສຳເລັດ (ປະຖົມມະການ26:15,ເພງສັນລະເສີນ138:8, ຟີລິປອຍ1:6)

# ເຖິງເວລາຍອມຈຳນົນ

ຂໍສະແດງຄວາມຍິນດີ ທີ່ທ່ານມີເພື່ອນໃໝ່ຄົນໜຶ່ງແລ້ວກໍ່ຄືພຣະເຢຊູ ພຣະອົງເປັນເພື່ອນທີ່ດີທີ່ສຸດເທົ່າທີ່ທ່ານເຄີຍມີມາ ທ່ານສາມາດໂອ້ລົມກັບພຣະອົງໄດ້ໃນທຸກເລື່ອງ ເພາະພຣະອົງຊົງເຂົ້າໃຈທ່ານສະເໝີ (ເຮັບເຣີ4:15) ພຣະອົງບໍ່ເຄີຍປະຕິເສດຫຼືຕຳນິຕິຕຽນຮ້າຍດ່າທ່ານ ບໍ່ມີສິ່ງໃດທີ່ໃຫຍ່ເກີນໄປສຳລັບພຣະເຈົ້າແລະເຊັ່ນດຽວກັນບໍ່ມີສິ່ງໃດທີ່ນ້ອຍເກີນໄປສຳລັງພຣະອົງ ພຣະອົງຊົງຕ້ອງການໃຫ້ທ່ານຍອມຮັບພຣະອົງໃນທຸກທາງ ແລະເຊີນພຣະອົງເຂົ້າມາມີສ່ວນໃນທຸກດ້ານແຫ່ງຊີວິດຂອງທ່ານ.

ທ່ານເປັນສິ່ງທີ່ຊົງສ້າງໃໝ່ ສິ່ງເກົ່າໆກໍ່ລ່ວງໄປ ແລະທຸກສິ່ງກາຍເປັນສິ່ງໃໝ່ທັງນັ້ນ(2ໂກຣິນໂທ5:17) ທ່ານໄດ້ຮັບຊີວິດໃໝ່ແລ້ວ.

ທ່ານອາດຈະຍັງເຮັດຜິດພາດໄດ້ ຄືກັນກັບທີ່ເຮົາທຸກຄົນ ຍັງຄົງຜິດພາດ ທ່ານມີສິ່ງທີ່ຕ້ອງ ການຮຽນຮູ້ອີກຕໍ່ໄປຈົນຕະຫຼອດຊີວິດແລະນີ້ເປັນພຽງຈຸດເລີ່ມຕົ້ນຂອງການເດີນທາງເທົ່ານັ້ນ ຈົ່ງຈື່ໄວ້ສະເໝີວ່າເມື່ອທ່ານເຮັດຜິດພາດ ທ່ານສາມາດຂໍການຍົກໂທດແລະການຊຳລະຈາກພຣະເຈົ້າໄດ້ ຈົ່ງໄວໃນການກັບໃຈຈາກຄວາມບາບແລະຢ່າປິດບັງສິ່ງໃດໆ ໄວ້ຈາກພຣະເຈົ້າເພາະພຣະອົງຊົງຮູ້ທຸກສິ່ງສະເໝີ.

ພຣະເຈົ້າຊົງຮັກທ່ານຫຼາຍ ພຣະອົງຊົງຮັກທ່ານຕະຫຼອດເວລາ ມື້ໃດທີ່ທ່ານມີການປະພຶດທີ່ດີ ໃນມື້ນັ້ນພຣະເຈົ້າບໍ່ໄດ້ຮັກທ່ານຫຼາຍຂຶ້ນ ຫຼືຖ້າມື້ໃດທ່ານມີການປະພຶດທີ່ບໍ່ດີ ໃນວັນນັ້ນພຣະເຈົ້າກໍ່ບໍ່ໄດ້ຊົງຮັກທ່ານໜ້ອຍລົງ ພຣະອົງຊົງຮັກທ່ານສະເໝີບໍ່ວ່າທ່ານຈະເປັນແນວໃດກໍ່ຕາມ ເຖິງເວລາທີ່ຕ້ອງສອນກ່ຽວກັບການດຳເນີນຊີວິດໃໝ່ແລ້ວ.

# ບົດທີ 4
# ທາງຊີວິດໃໝ່

ເມື່ອທ່ານເຂົ້າສູ່ການດຳເນີນຊີວິດໃໝ່ໂດຍພຣະເຈົ້າ, ກັບພຣະເຈົ້າ ແລະເພື່ອພຣະເຈົ້າແລ້ວ ທ່ານຈະພົບວ່າ ມີຫຼາຍຫຼັກການຂອງພຣະອົງທີ່ເບິ່ງຄືວ່າຈະສວນທາງກັບວິທີການຂອງໂລກ ແທ້ຈິງແລ້ວຄືໂລກຕ່າງຫາກທີ່ສວນທາງ ເພາະອານາຈັກຂອງພຣະເຈົ້າເປັນຝ່າຍທີ່ຖືກຕ້ອງ ເຮົາບໍ່ມີຄວາມລຶ້ງເຄີຍ ທີ່ຈະເຮັດຕາມວິທີທາງຂອງພຣະເຈົ້າ ແລະອາດຈະເບິ່ງຄືວ່າເຂົ້າໃຈຍາກແລະລຳບາກທີ່ຈະເຮັດຕາມໃນຊ່ວງທຳອິດ.

## ການຮັບບັບຕິສະມາ

ສິ່ງທຳອິດອັນໜຶ່ງ ທີ່ທ່ານຄວນເຮັດເມື່ອເປັນຜູ້ເຊື່ອໃໝ່ຄືການຮັບບັບຕິສະມາໃນນ້ຳ ການຮັບບັບຕິສະມາເປັນສັນຍາລັກທີ່ສະແດງອອກໃຫ້ເຫັນເຖິງການຕັດສິນໃຈຂອງທ່ານເພື່ອຕິດຕາມພຣະຄຣິດ ເມື່ອຄົນຜູ້ໜຶ່ງຈຸ່ມລົງໄປໃນນ້ຳ ນັ້ນເປັນສັນຍາລັກເຖິງການຝັງຊີວິດເກົ່າ ແລະເມື່ອເຂົາຖືກຍົກຂຶ້ນມາຈາກນ້ຳ ນັ້ນເປັນສັນຍາລັກເຖິງການເປັນຄືນມາສູ່ຊີວິດໃໝ່ ການຮັບບັບຕິສະມາເປັນສິ່ງທີ່ເຮົາເຮັດ ເພື່ອເປັນການເຊື່ອຟັງພຣະເຈົ້າ.

## *ທາງຊີວິດໃໝ່*

*ນ້ຳນັ້ນໝາຍເຖິງພິທີຮັບບັບຕິສະມາ ທີ່ພວກເຈົ້າລອດພົ້ນດຽວນີ້ ບັບຕິສະມານີ້ບໍ່ແມ່ນການຊຳລະສິ່ງເປື້ອນເປິທາງຮ່າງກາຍ(ອາບນ້ຳ) ແຕ່ເປັນ ການຮຽນຂໍຕໍ່ພຣະເຈົ້າ ດ້ວຍໃຈສຳນຶກຜິດແລະຊອບ(ບໍລິສຸດແລະມີສັນຕິສຸກຈາກພາຍໃນ)ອັນເສາະໃສ ບັບຕິສະມານີ້ໃຫ້ເຖິງທີ່ພົ້ນເພາະດ້ວຍການທີ່ພຣະເຢຊູຄຣິດເຈົ້າຊົງເປັນຄືນມາຈາກຕາຍ*(1ເປໂຕ:3:21)

*ເປໂຕກ່າວແກ່ເຂົາວ່າ ແຕ່ລະຄົນໃນພວກທ່ານ ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ (ປ່ຽນມຸມມອງແລະຈຸດປະສົງເພື່ອຍອມຮັບພຣະໄທຂອງພຣະເຈົ້າໃນຄວາມເປັນຕົວຕົນພາຍໃນທ່ານແທນທີ່ຈະປະຕິເສດ) ແລະຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິດເຈົ້າເພື່ອວ່າບາບກຳຂອງພວກທ່ານຈະໄດ້ຮັບການອະໄພ ແລະພວກທ່ານກໍ່ຈະໄດ້ຮັບຂອງປະທານຈາກພຣະເຈົ້າ ຄືພຣະວິນຍານບໍລິສຸດເຈົ້າ* (ກິດຈະການ 2:38)

## ໄປຄຣິສຕະຈັກ

ອີກສິ່ງໜຶ່ງທີ່ຂ້ອຍຂໍແນະນຳຄື ການເຂົ້າຮ່ວມໃນຄຣິສຕະຈັກທ້ອງຖິ່ນ ການໄປຄຣິສຕະຈັກນັ້ນ ບໍ່ໄດ້ເຮັດໃຫ້ຄົນໆໜຶ່ງສາມາດເປັນຄຣິສຕຽນໄດ້ຫຼາຍເກີນກວ່າ ຄົນທີ່ກຳລັງແປງລົດຢູ່ໃນກະລ້າລົດຂອງຂ້ອຍເລີຍ ເຮົາບໍ່ໄດ້ເປັນຄຣິສຕຽນໄດ້ໂດຍການໄປໂບດ ແຕ່ຖ້າເປັນຄຣິສຕຽນແລ້ວ ເຮົາຄວນຢາກນະມັດສະການພຣະເຈົ້າ ແລະສາມັກຄີທຳກັບພີ່ນ້ອງຜູ້ເຊື່ອຄົນອື່ນໆ ຄຣິສຕະຈັກຍັງເປັນສະຖານທີ່ສຶກສາພຣະຄຳຂອງພຣະເຈົ້າ.

# ທາງຊີວິດໃໝ່

ບໍ່ແມ່ນທຸກຄຣິສຕະຈັກຈະເປັນຄຣິສຕະຈັກທີ່ດີ ບາງແຫ່ງເບິ່ງຄືເຄັ່ງສາສະໜາ ທີ່ເບິ່ງດີແຕ່ພາຍນອກ ແຕ່ພາຍໃນພັດບໍ່ມີຫຍັງທີ່ຈະຊ່ວຍໃຜໄດ້ເລີຍ ຖ້າທ່ານໄປຄຣິສຕະຈັກ ທີ່ບໍ່ໄດ້ບຳລຸງລ້ຽງດ້ວຍພຣະຄຳຂອງພຣະເຈົ້າ ແລະບໍ່ໄດ້ທ້າທາຍທ່ານ ໃຫ້ເຕີບໃຫຍ່ໃນການດຳເນີນຊີວິດກັບພຣະເຈົ້າໃນແຕ່ລະມື້ແລ້ວກໍ່ຢ່າຟ້າວປັກໃຈໄປບ່ອນນັ້ນເທື່ອຈົນກວ່າທ່ານຈະພົບຄຣິສຕະຈັກທີ່ດີແທ້ໆ ຄຣິສຕະຈັກກໍ່ຄືກັບແພດບໍ່ແມ່ນແພດທຸກຄົນຈະເກັ່ງຄືກັນໝົດ ແຕ່ກໍ່ບໍ່ແມ່ນທຸກຄົນຈະບໍ່ເກັ່ງຄືກັນໝົດອີກດ້ວຍພຽງແຕ່ທ່ານຈຳເປັນຕ້ອງຫາຄົນທີ່ເກັ່ງໃຫ້ພົບເທົ່ານັ້ນ ບາງຄົນມັກ ຄຣິສຕະຈັກໃຫຍ່ ບາງຄົນມັກຄຣິສຕະຈັກນ້ອຍໆ ບາງຄົນມັກ ຄຣິສຕະຈັກທີ່ມີສັງກັດຄະນະນິກາຍ ບາງຄົນມັກຄຣິສຕະຈັກ ທີ່ບໍ່ມີສັງກັດ ໝາຍຄວາມວ່າພວກເຂົາບໍ່ຕ້ອງຂຶ້ນຢູ່ກັບອົງກອນທີ່ໃຫຍ່ກວ່າ ຂໍ້ສຳຄັນຄືຖ້າທ່ານໄປເຂົ້າຮ່ວມກັບຄຣິສຕະຈັກ ທີ່ແຂງແຮງໝັ້ນຄົງກໍ່ຈະຊ່ວຍທ່ານໄດ້ຫຼາຍ ການທີ່ທ່ານມີໂອກາດໄດ້ສ້າງມິດຕະພາບກັບຄົນທີ່ມີຄວາມເຊື່ອຄືກັນນັ້ນ ຖືວ່າເປັນກຳໄລຂອງຊີວິດແລະການທີ່ທ່ານໄດ້ຄົບຄ້າສະມາຄົມກັບຄົນທີ່ມີຈະລິຍະທຳກໍ່ຊ່ວຍທ່ານໃຫ້ສາມາດຫຼີກລ່ຽງຈາກການທົດລອງຂອງໂລກໄດ້.

ສິ່ງສຳຄັນກໍ່ໃຫ້ທ່ານກວດເບິ່ງໃຫ້ແນ່ໃຈວ່າ ທ່ານໄດ້ໄປເຂົ້າຮ່ວມໃນຄຣິສຕະຈັກ ທີ່ເສີມສ້າງທ່ານໃຫ້ເຕີບໃຫຍ່ໃນຖານະຄຣິສຕຽນແທ້ໆ ການທີ່ຜູ້ເຊື່ອໃໝ່ໄດ້ຮຽນຮູ້ຫຼາຍສິ່ງຫຼາຍຢ່າງເປັນເລື່ອງທີ່ສຳຄັນຫຼາຍ ຖ້າຫາກເຂົາບໍ່ໄດ້ຮຽນຮູ້ ຫຼືມີການເຕີບໃຫຍ່ ເຂົາກໍ່ຕົກຢູ່ໃນອັນຕະລາຍ ຫຼື ສ່ຽງທີ່ຈະກັບໄປໃຊ້ຊີວິດແບບເດີມໆອີກ .

ກຸ່ມສຶກສາພຣະຄໍາພີກຸ່ມຍ່ອຍນັ້ນ ເປັນບ່ອນທີ່ເສີມສ້າງຊີວິດຜູ້ເຊື່ອໃໝ່ໄດ້ດີຫຼາຍ ທ່ານຈະມີໂອກາດຮຽນຮູ້ ຖາມຄໍາຖາມ ຮັບການອະທິຖານເພື່ອແລະມີສ່ວນຮ່ວມໃນການອະທິຖານເພື່ອຜູ້ອື່ນ ຂ້ອຍຫວັງວ່າຄຣິສຕະຈັກຂອງທ່ານຈະຈັດຕຽມຊັ້ນສຶກສາພຣະຄໍາພີ ສໍາລັບຜູ່ໃຫຍ່ ຫຼື ກຸ່ມຕາມບ້ານເພື່ອທ່ານຈະສາມາດເຂົ້າຮ່ວມໄດ້ ຄຣິສຕະຈັກບໍ່ໄດ້ເປັນສະຖານທີ່ທີ່ເຮົາໄປຮັບພຽງຢ່າງດຽວ ແຕ່ເປັນສະຖານທີ່ທີ່ເຮົາໄປເພື່ອຄົ້ນຫາ ແລະສະແດງອອກເຖິງ ການຮັບໃຊ້ພຣະເຈົ້າຂອງເຮົາ ພາຍໃນພຣະກາຍຂອງພຣະຄຣິດ (ຄຣິສຕະຈັກ) ໃນຂະນະທີ່ທ່ານຮັບຈາກຜູ້ອື່ນທ່ານຈໍາເປັນຕ້ອງໃຫ້ຜູ້ອື່ນພ້ອມ.

*ທາງຊີວິດໃໝ່*

# ການອຸທິດຕົວເອງ

ການອຸທິດຕົວເອງນັ້ນ ເປັນສິ່ງທີ່ສໍາຄັນຢ່າງຍິ່ງ ບໍ່ແມ່ນການເຮັດຜິດພຽງເທື່ອດຽວຂອງເຮົາ ທີ່ເຮັດໃຫ້ທັງຊີວິດຂອງເຮົາ ຫຍຸ້ງຍາກສັບສົນ ແຕ່ມັນເກີດຂຶ້ນເນື່ອງຈາກການທີ່ເຮົາເຮັດຜິດເປັນເລື້ອຍໆ ແລະການທີ່ເຮົາເຮັດຖືກຕ້ອງພຽງເທື່ອດຽວ ຫຼືສອງເທື່ອບໍ່ໄດ້ຊ່ວຍໃຫ້ເຮົາດໍາເນີນຊີວິດໃໝ່ທີ່ພຣະເຈົ້າຊົງປະທານໃຫ້ແກ່ເຮົາ ເຮົາຕ້ອງພຽນພະຍາຍາມແລະເຮັດໃນສິ່ງທີ່ເຮົາຮູ້ວ່າເຮົາຄວນເຮັດເຖິງແມ່ນວ່າເຮົາຈະບໍ່ມັກກໍ່ຕາມ ເຮົາຕ້ອງສະເໝີຕົ້ນສະເໝີປາຍ ພຣະເຈົ້າຊົງປະທານພຣະວິນຍານແຫ່ງການບັງຄັບຕົນເອງໃຫ້ແກ່ທ່ານ (2 ຕີໂມທຽວ1:7) ແລະສິ່ງທີ່ຈໍາເປັນທັງໝົດທີ່ທ່ານຕ້ອງເຮັດກໍ່ຄືເອົາມັນມາປະຕິບັດ.

ຈົ່ງອຸທິດຕົນເອງເພື່ອໃຊ້ເວລາກັບພຣະເຈົ້າ ສຶກສາພຣະຄຳຂອງພຣະອົງ ແລະ ອ່ານປຶ້ມທີ່ສາມາດຊ່ວຍໃຫ້ທ່ານເຂົ້າໃຈພຣະຄຳພີຫຼາຍຂຶ້ນ ຟັງເທັບ ຫຼືຊີດີຄຳສອນ ຫຼືເບິ່ງລາຍການໂທລະພາບຄຣິສຕຽນ ໃຊ້ເວລາໃນການອະທິຖານ ຮຽນຮູ້ການອະທິຖານທີ່ອອກມາຈາກໃຈຂອງທ່ານເອງ ຈື່ໄວ້ວ່າ ພຣະເຈົ້າຊົງສົນໃຈໃນທຸກສິ່ງທີ່ກ່ຽວຂ້ອງກັບທ່ານ ແລະການອະທິຖານເປັນວິທີການສົນທະນາແບບງ່າຍໆກັບພຣະເຈົ້າ ເມື່ອຊີວິດຄຣິສຕຽນຂອງທ່ານເຕີບໃຫຍ່ຫຼາຍຂຶ້ນ ທ່ານຈະບໍ່ຮຽນຮູ້ພຽງແຕ່ ການໂອ້ລົມກັບພຣະເຈົ້າເທົ່ານັ້ນ ແຕ່ທ່ານຈະຮຽນຮູ້ວິທີການຟັງສຽງ ຂອງພຣະອົງອີກດ້ວຍ ແລະສິ່ງນັ້ນຈະເຮັດໃຫ້ຊີວິດທີ່ດຳເນີນໄປກັບພຣະເຈົ້າຂອງທ່ານພົບກັບຄວາມຕື່ນເຕັ້ນຫຼາຍຍິ່ງຂຶ້ນອີກ .

ອີກສິ່ງສຳຄັນທີ່ຮຽກຮ້ອງໃຫ້ມີການອຸທິດຕົວເອງກໍ່ຄື ການຖວາຍພຣະເຈົ້າຊົງປະທານໃຫ້ເຮົາຢ່າງຫຼວງຫຼາຍ ເພື່ອທີ່ຈະມອບຖວາຍກັບຄືນໃຫ້ແກ່ພຣະອົງແລະວຽກງານຂອງພຣະອົງໃນໂລກນີ້ ເມື່ອທ່ານໄດ້ຮັບຄວາມຊ່ວຍເຫຼືອກໍ່ເພື່ອໃຫ້ທ່ານຊ່ວຍເຫຼືອຄົນອື່ນ ແລະວິທີໜຶ່ງທີ່ທ່ານສາມາດເຮັດໄດ້ກໍ່ໂດຍຜ່ານການອຸທິດຕົວໃນການຖວາຍໃຫ້ແກ່ຄຣິສຕະຈັກ ແລະວຽກງານຮັບໃຊ້ອື່ນໆ ທີ່ເຄີຍຊ່ວຍເຫຼືອທ່ານ ແລະໃນສິ່ງທີ່ທ່ານເຊື່ອທຸກສິ່ງທີ່ເຮົາໃຫ້ແກ່ພຣະເຈົ້າ ພຣະອົງຈະຊົງໃຫ້ກັບຄືນ ເມື່ອເວລາຜ່ານໄປພຣະຄຳຂອງພຣະເຈົ້າບອກເຮົາວ່າຈະເກັບກ່ຽວໃນສິ່ງທີ່ເຮົາຫວ່ານ.

ສິ່ງສຳຄັນອີກຢ່າງໜຶ່ງ ນອກເໜືອຈາກການຕ້ອນຮັບພຣະຄຣິດແລະກາຍເປັນສິ່ງທີ່ຊົງສ້າງໃໝ່ໃນພຣະອົງແລ້ວ ກໍ່ຄືການລົງທຶນໃນການຖວາຍ ຖ້າຫາກວ່າຫົວໃຈຂອງເຮົາບໍ່ໄດ້ຮັບການປ່ຽນແປງເມື່ອເຮົາມີປະສົບການໃນການຮັກພຣະເຢຊູໃນລະດັບທີ່ເລິກເຊິ່ງຫຼາຍຂຶ້ນ ເຮົາກໍ່ເປັນຄົນທີ່ເຫັນແກ່ຕົວແລະຕ້ອງການໃຫ້ຄົນອື່ນຖວາຍໃຫ້ເຮົາເທົ່ານັ້ນ.

# ຈົ່ງຮັບບັບຕິສະມາໃນພຣະວິນຍານບໍລິສຸດ

ການຮັບບັບຕິສະມາ ໝາຍເຖິງການຈຸ່ມລົງລົບນໍ້າ ສິ່ງໃດໆ ກໍ່ຕາມທີ່ຈຸ່ມລົງໄປໃນນໍ້າແລ້ວຈະໄດ້ຮັບການເຕີມເຕັມ ກໍ່ຕໍ່ເມື່ອສິ່ງນັ້ນເປີດອອກ ຖ້າຫາກທ່ານເປີດອອກ ທ່ານສາມາດໄດ້ຮັບການເຕີມເຕັມດ້ວຍພຣະວິນຍານບໍລິສຸດຢ່າງສົມບູນ ທ່ານໄດ້ຮັບພຣະວິນຍານບໍລິສຸດເມື່ອທ່ານຕ້ອນຮັບພຣະເຢຊູຄຣິດໃນຖານະພຣະຜູ້ຊ່ວຍໃຫ້ລອດພົ້ນ ແຕ່ທ່ານອາດຈະຍັງບໍ່ເຖິງຈຸດທີ່ທ່ານພ້ອມເປີດທຸກຫ້ອງຫົວໃຈຂອງທ່ານ ແລະຍອມໃຫ້ພຣະວິນຍານເຕີມເຕັມທ່ານຢ່າງສົມບູນ.

ທ່ານມີພຣະວິນຍານບໍລິສຸດ ແຕ່ທ່ານຕ້ອງໝັ້ນໃຈວ່າ ພຣະອົງຊົງມີທ່ານທັງໝົດ ຫຼື ບໍ່ ພຣະເຈົ້າຊົງຕ້ອງການໃຊ້ທ່ານ ໃນງານຮັບໃຊ້ຂອງພຣະອົງ ແລະທ່ານຕ້ອງການຣິດອຳນາດ ຂອງພຣະວິນຍານບໍລິສຸດ ເພື່ອເຮັດວຽກງານເຫຼົ່ານັ້ນໃຫ້ສຳເລັດແລະເກີດຜົນ.

ພຣະເຈົ້າ ຊົງມອບຂອງປະທານຢ່າງເໜືອທຳມະຊາດ ( ຄວາມສາມາດໃນການໃຊ້ພະລັງງານເໜືອທຳມະຊາດ) ເພື່ອຊ່ວຍເຮົາໃນການດຳເນີນຊີວິດປະຈຳວັນ ຂອງປະທານນັ້ນມີຫຼາຍຢ່າງ ແລະທ່ານສາມາດຮັບໄດ້.

## *ທາງຊີວິດໃໝ່*

ແຕ່ຂອງປະທານບາງຢ່າງ ອາດຈະເດັ່ນກວ່າ ຂອງປະທານຢ່າງອື່ນ ຂ້ອຍມີຂອງປະທານຊັດເຈນໃນດ້ານການສອນຄົນອື່ນໆກໍ່ມີຂອງປະທານ

ໃນດ້ານດົນຕີຫຼືການບໍລິຫານການງານແຫ່ງຄວາມຮັກເມດຕາຫຼືການຊ່ວຍເຫຼືອ ໃນ1ໂຄຣິນໂທ 12:7-10 ເວົ້າເຖິງຂອງປະທານ ເກົ້າປະເພດທີ່ເຮົາຄວນຮູ້ ຖ້ອຍຄຳອັນປະກອບດ້ວຍສະຕິປັນຍາ , ຂອງປະທານແຫ່ງຄວາມເຊື່ອ, ອຳນາດໃນການປິ່ນປົວພະຍາດ, ທຳການອັດສະຈັນ, ເຜີຍພຣະຄຳ (ແປຄວາມຈາກນ້ຳພຣະໄທແລະພຣະປະສົງຂອງພຣະເຈົ້າ) , ຄວາມສາມາດໃນການສັງເກດວິນຍານ(ຈຳແນກລະຫວ່າງວິນຍານດີ ແລະວິນຍານຊົ່ວ -ອະທິບາຍຄວາມຈາກພາສາອັງກິດ-ຜູ້ແປ) ການເວົ້າພາສາແປກໆ ແລະຄວາມສາມາດໃນການແປພາສາແປກໆ.

ເຖິງແມ່ນວ່າທ່ານອາດຈະບໍ່ເຂົ້າໃຈຂອງປະທານເຫຼົ່ານີ້ ແຕ່ຂ້ອຍຢາກໜຸນໃຈໃຫ້ທ່ານທູນຂໍຂອງປະທານເຫຼົ່ານີ້ຈາກພຣະເຈົ້າແລະຂໍໃຫ້ພຣະອົງສອນທ່ານໃຫ້ພຣະອົງ ສອນທ່ານໃຫ້ຮູ້ຂອງປະທານຕ່າງລະຢ່າງ ແລະວິທີການໃຊ້ຢ່າງຖືກຕ້ອງເຮົາເຫັນຫຼາຍກໍລະນີໃນພຣະຄຳພີທີ່ມີຄົນເວົ້າພາສາແປກໆ (ພາສາຝ່າຍວິນຍານ) ເມື່ອເຮົາອະທິຖານພາສາແປກໆເຮົາກຳລັງເວົ້າໃນສິ່ງທີ່ເປັນຄວາມລັບແລະເວົ້າຄວາມລີ້ລັບຕໍ່ພຣະເຈົ້າແລະເຮົາກຳລັງເສີມສ້າງຕົວເອງໃຫ້ຈຳເລີນເຕີບໂຕຂຶ້ນ ອັກຄະທູດ ໂປໂລ ບອກວ່າລາວຢາກໃຫ້ທຸກຄົນເວົ້າພາສາແປກໆ (1ໂຄຣິນໂທ14:2,4-5).

ເລື່ອງຂອງປະທານການເວົ້າພາສາແປກໆ ນັບວ່າເປັນຈຸດທີ່ເຮັດໃຫ້ເກີດເປັນຄວາມແຕກແຍກໃນທ່າມກາງຄຣິສຕຽນມາຕັ້ງດົນຫຼາຍປີ ມີບາງຄົນເຊື່ອວ່າ ຂອງປະທານນີ້ແມ່ນຂອງປະທານສຳລັບຍຸກປະຈຸບັນ ແຕ່ໃນຂະນະທີ່ຄົນອື່ນໆພັດບໍ່ເຊື່ອແນວນັ້ນ ສຳລັບສ່ວນຕົວຂອງຂ້ອຍແລ້ວຂ້ອຍໃຊ້ຂອງປະທານເຫຼົ່ານີ້ ມາຕະຫຼອດເວລາສາມສິບປີ ຂ້ອຍເວົ້າພາສາແປກໆແລະຂ້ອຍຮູ້ຂອງປະທານນີ້ມີຄວາມສຳຄັນຕໍ່ຊີວິດຄຣິສຕຽນໃນຍຸກປະຈຸບັນນີ້ແທ້ໆ ເຮົາຕ້ອງການທຸກສິ່ງທີ່ຊ່ວຍເສີມສ້າງເຮົາໄດ້.

# ທາງຊີວິດໃໝ່

ຫຼາຍໆຄັ້ງ ທີ່ຄົນມັກປະຕິເສດໃນສິ່ງທີ່ພວກເຂົາບໍ່ເຄີຍມີປະສົບການມາກ່ອນ ຫຼືໃນສິ່ງທີ່ພວກເຂົາບໍ່ເຂົ້າໃຈ ນີ້ແມ່ນຄວາມຜິດພາດເຮົາຄວນອ່ານພຣະຄຳພີແລະເຊື່ອໃນສິ່ງທີ່ ພຣະຄຳພີບອກ .

ຂ້ອຍຂໍເຕືອນໃຫ້ທ່ານຈົດຈໍ່ຢູ່ທີ່ພຣະວິນຍານບໍລິສຸດ ບໍ່ແມ່ນຢູ່ທີ່ຂອງປະທານຂອງພຣະອົງ ຂອງປະທານຈະມາເອງມີບາງຄົນທີ່ພະຍາຍາມຜະລິດຂອງປະທານນັ້ນທັງການເວົ້າພາສາແປກໆແລະຂອງປະທານປະເພດອື່ນ ເມື່ອເຮົາໄປຊື້ເກີບຄູ່ໜຶ່ງ ເຮົາບໍ່ໄດ້ເຂົ້າໄປໃນຮ້ານແລ້ວຖາມສາຍມັດເກີບ ເມື່ອເຮົາຊື້ເກີບ ສາຍມັດເກີບມັນກໍ່ຈະມາພ້ອມກັບເກີບນັ້ນເອງ ໃນທຳນອງດຽວກັນກັບພຣະວິນຍານບໍລິສຸດ ຂໍໃຫ້ທ່ານທູນຂໍການຊົງສະຖິດຂອງພຣະອົງຫຼາຍຂຶ້ນໃນຊີວິດຂອງທ່ານເປັນປະຈຳທຸກມື້ ແລ້ວຂອງປະທານການເວົ້າພາສາແປກໆ ຫຼືແມ່ນແຕ່ຂອງປະທານອື່ນໆ ກໍ່ຈະມາໃນເວລາທີ່ເໝາະສົມເອງ.

# ສະແຫວງຫາການຊົງສະຖິດຂອງພຣະເຈົ້າ ບໍ່ແມ່ນຂອງຂວັນຈາກພຣະອົງ

ພຣະເຈົ້າຕ້ອງການເຮັດສິ່ງທີ່ດີເພື່ອທ່ານ ພຣະອົງຕ້ອງການປະທານພຣະພອນຫຼວງຫຼາຍໃຫ້ທ່ານ ແຕ່ສິ່ງທີ່ສຳຄັນແມ່ນການທີ່ທ່ານສະແຫວງຫາພຣະອົງໃນສິ່ງທີ່ພຣະອົງຊົງເປັນ ບໍ່ແມ່ນສິ່ງທີ່ພຣະອົງຊົງສາມາດເຮັດເພື່ອທ່ານໄດ້ ພຣະເຈົ້າຊົງອັດສະຈັນເກີນກວ່າທ່ານຈະຫາສິ່ງໃດມາທຽບໄດ້ ການສະຖິດຂອງພຣະອົງກໍ່ລ້ຳເລີດແທ້ໆ ເມື່ອທ່ານສະແຫວງຫາພຣະພັກຂອງພຣະອົງທ່ານຈະພົບວ່າພຣະຫັດຂອງພຣະອົງນັ້ນເປີດກວ້າງອອກສະເໝີ ແຕ່ຖ້າທ່ານເອົາແຕ່ສະແຫວງຫາພຣະຫັດ ທ່ານກໍ່ກຳລັງໝິ່ນປະໝາດພຣະອົງ ບໍ່ມີໃຜແມ່ນແຕ່ພຣະເຈົ້າ ທີ່ຢາກຈະເປັນເຄື່ອງມືເພື່ອຫາຜົນປະໂຫຍດໃຫ້ກັບບາງຄົນດອກ.

ຈົ່ງທູນຂໍພຣະເຈົ້າສຳລັບສິ່ງໃດໆ ທີ່ທ່ານຕ້ອງການ ຫຼືມີຄວາມຈຳເປັນ ແລະຖ້ານັ້ນເປັນສິ່ງທີ່ດີທີ່ສຸດສຳລັບທ່ານແລ້ວ ພຣະອົງຈະປະທານໃຫ້ແກ່ທ່ານໃນເວລາຂອງພຣະອົງ ແຕ່ຂໍໃຫ້ທ່ານຈື່ໄວ້ສະເໝີວ່າ ຫຼາຍກວ່າສິ່ງໃດໆທັງໝົດທ່ານຕ້ອງການພຣະອົງ ທ່ານຕ້ອງການການຊົງສະຖິດຢູ່ຂອງພຣະອົງຫຼາຍຂຶ້ນ ທ່ານຕ້ອງການວິທີທາງແລະພຣະລັກສະນະ , ພຣະປັນຍາ, ຄວາມເຂົ້າໃຈ ແລະຣິດອຳນາດຂອງພຣະອົງຫຼາຍຂຶ້ນ .

## *ທາງຊີວິດໃໝ່*

ພຣະເຈົ້າຊົງເປັນທຸກສິ່ງ ແລະຖ້າປາດສະຈາກພຣະອົງແລ້ວເຮົາກໍ່ບໍ່ມີຫຍັງເລີຍ ພຣະເຢຊູກວ່າວ່າ *"ຖ້າແຍກຈາກເຮົາແລ້ວທ່ານຈະເຮັດສິ່ງໃດບໍ່ໄດ້ເລີຍ"* ໂຢຮັນ 15:5

*ດ້ວຍວ່າ,ສິ່ງສາລະພັດເປັນມາຈາກພຣະອົງ ມີມາດ້ວຍພຣະອົງແລະເພື່ອພຣະອົງ ຂໍໃຫ້ພຣະສະຫງ່າຣາສີ ຈົ່ງເປັນຂອງພຣະອົງຕະຫຼອດໄປເປັນນິດເທີ້ນ ອາແມນ(ຂໍໃຫ້ເປັນໄປຢ່າງນັ້ນ)* ໂຣມ11:36

# ມີຫຼາຍສິ່ງທີ່ຕ້ອງຮຽນຮູ້

ຍັງມີອີກຫຼາຍສິ່ງ ທີ່ທ່ານຈະຕ້ອງຮຽນຮູ້ ແລະທີ່ຂ້ອຍຈະແບ່ງປັນໃຫ້ແກ່ທ່ານໃນປຶ້ມເຫຼັ້ມນີ້ ທ່ານຈຳເປັນຕ້ອງຮຽນຮູ້ຫຼັກການທີ່ເປັນພື້ນຖານຄວາມເຊື່ອຂອງທ່ານ ແລະຮາກຖານຄຳສອນຂອງຄຣິສຕຽນ ສ່ວນຫຼາຍແລ້ວໃນທຸກຄຣິສຕະຈັກຈະມີຊັ້ນຮຽນສຳລັບຜູ້ເຊື່ອໃໝ່ ແລະຂໍແນະນຳໃຫ້ທ່ານເຂົ້າຊັ້ນຮຽນເຫຼົ່ານັ້ນ ທ່ານຈະໄດ້ຮຽນຮູ່ວ່າ ພຣະເຢຊູບັງເກີດມາຈາກຍິງບໍລິສຸດ ຂ້ອຍຮູ້ດີວ່າເມື່ອຟັງເບິ່ງແລ້ວມັນບໍ່ໜ້າເປັນໄປໄດ້ ແຕ່ມັນກໍ່ເປັນຄວາມຈິງ ແລະການທີ່ທ່ານຈະມີຄວາມເຂົ້າໃຈ ເຖິງເຫດຜົນໃນເລື່ອງນີ້ກໍ່ສຳຄັນຢ່າງຍິ່ງ ທ່ານຈະໄດ້ຮຽນຮູ້ເຖິງຄວາມສຳຄັນຂອງການຖວາຍເງິນຄືນໃຫ້ແກ່ພຣະເຈົ້າ ເພື່ອຂ່າວປະເສີດສາມາດຖືກປະກາດອອກໄປຫາຄົນທີ່ຍັງບໍ່ທັນຮູ້ຈັກພຣະອົງ ທ່ານຈະໄດ້ຮຽນຮູ້ກ່ຽວກັບຕຣີເອການຸພາບ ຄວາມຈິງຂອງການຮັບໃຊ້ພຣະເຈົ້າອົງດຽວ ແຕ່ຊົງສຳແດງເປັນສາມພຣະພາກຄື : ພຣະບິດາ, ພຣະບຸດ ແລະພຣະວິນຍານບໍລິສຸດທ່ານຈະໄດ້ຮຽນຮູ້ກ່ຽວກັບວຽກງານຂອງທູດສະຫວັນ ແລະ ຄວາມສຳຄັນກ່ຽວກັບ ພຣະໂລຫິດຂອງພຣະເຢຊູ , ວິທີການຟັງສຽງພຣະເຈົ້າ, ຫຼັກຄຳສອນກ່ຽວກັບຄວາມຊອບທຳ ,ການກັບໃຈແລະເລື່ອງອື່ນໆອີກຫຼວງຫຼາຍ.

# ທາງຊີວິດໃໝ່

ເຖິງແມ່ນວ່າຂ້ອຍຈະບໍ່ສາມາດແບ່ງປັນທຸກເລື່ອງໄດ້ໃນປື້ມເຫຼັ້ມນີ້ ແຕ່ຂ້ອຍກໍ່ມີບາງສິ່ງທີ່ຂ້ອຍເຊື່ອວ່າເປັນພື້ນຖານທີ່ສຳຄັນສຳລັບຊີວິດໃໝ່ຂອງທ່ານທີ່ຂ້ອຍຢາກຈະແບ່ງປັນ ໃຫ້ເຮົາມາຮຽນຮູ້ກັນເທາະ.

# ບົດທີ 5
# ການຄິດແບບໃໝ່

ການຮຽນຮູ້ຈັກຄິດດ້ວຍວິທີໃໝ່ນັບວ່າເປັນສິ່ງທີ່ສຳຄັນທີ່ສຸດພຣະເຈົ້າຊົງມີແຜນການທີ່ດີສຳລັບທ່ານ ແລະຊີວິດຂອງທ່ານ ແຕ່ທ່ານຕ້ອງເຫັນພ້ອມກັບພຣະອົງໃນແຜນການເຫຼົ່ານັ້ນ ຊາຕານມີແຜນການສຳລັບທ່ານ ແລະຊີວິດຂອງທ່ານຄືກັນ ແລະມັນກໍ່ບໍ່ແມ່ນແຜນການທີ່ດີເລີຍ ຂີ້ລັກ (ຊາຕານ) ມາເພື່ອລັກ,ຂ້າແລະທຳລາຍ (ໂຢຮັນ10:10) ຊາຕານມາປ່ອນຄວາມຄິດຜິດໆທຸກຮູບແບບເຂົ້າມາໃນໃຈຂອງທ່ານ ມັນຫວັງວ່າທ່ານຈະເຊື່ອ ແລະເຫັນພ້ອມກັບມັນ ຊາຕານໃຊ້ວິທີນີ້ໃນການຫຼອກລວງຄົນແລະເພື່ອຫາຊ່ອງທາງເຂົ້າໄປໂຈມຕີຊີວິດຂອງພວກເຂົາ.

*ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້ (ຕາມສະໄໝນິຍົມ ແລະຍຶດຕິດກັບສິ່ງພາຍນອກ ຍຶດຖືປະເພນີພາຍນອກ) ແຕ່ຈົ່ງຮັບການຊົງປ່ຽນແປງຈິດໃຈຂອງພວກເຈົ້າໃໝ່(ຄວາມຄິດແລະທັດສະນະຄະຕິ) ແລ້ວອຸປະນິໄສຂອງພວກເຈົ້າເຈົ້າຈຶ່ງຈະປ່ຽນໃໝ່ ເພື່ອພວກເຈົ້າຈະໄດ້ຮູ້(ເພື່ອຕົວທ່ານເອງ) ນ້ຳພຣະໄທຂອງພຣະເຈົ້າ ຄືຮູ້ວ່າອັນໃດດີອັນໃດເປັນທີ່ພໍພຣະໄທແລະອັນໃດດີທີ່ສຸດ(ໃນສາຍຕາຂອງພຣະອົງເພື່ອທ່ານ)* ໂຣມ12:2

ຂໍ້ພຣະຄຳພີຂ້າງເທິງບອກເຮົາໄວ້ຢ່າງຊັດເຈນວ່າຊີວິດຂອງເຮົາບໍ່ສາມາດປ່ຽນແປງໄດ້ຈົນກວ່າຄວາມຄິດຂອງເຮົາຈະປ່ຽນ ຖ້າທ່ານຕ້ອງການມີຊີວິດໃໝ່ ທ່ານຕ້ອງມີວິທີຄິດແບບໃໝ່ ພຣະເຈົ້າຊົງມີແຜນການດີສຳລັບແຕ່ລະຄົນ ແຕ່ເຮົາຈະເຫັນມັນເກີດຂຶ້ນໄດ້ກໍ່ຕໍ່ເມື່ອເຮົາຮູ້ເຖິງຄວາມສຳຄັນຂອງການຄິດຢ່າງຖືກຕ້ອງ.

## ທ່ານສາມາດຄວບຄຸມຄວາມຄິດຂອງທ່ານເອງໄດ້

ບາງເທື່ອທ່ານອາດຈະເປັນຄືກັນກັບຂ້ອຍ ແຕ່ກ່ອນທີ່ຄິດວ່າທ່ານບໍ່ສາມາດເຮັດຫຍັງໄດ້ກ່ຽວກັບຄວາມຄິດຂອງທ່ານເອງ ນັ້ນມັນບໍ່ຖືກຕ້ອງ ທ່ານສາມາດເລືອກໄດ້ວ່າຈະຄິດຫຼືບໍ່ຄິດຫຍັງ ແລະທ່ານຄວນເລືອກດ້ວຍຄວາມລະມັດລະວັງ ຄວາມຄິດໄປບ່ອນໃດທ່ານກໍ່ໄປບ່ອນນັ້ນ ເຮົາທຸກຄົນເຄີຍມີປະສົບການໃນການເລີ່ມຕົ້ນຄິດ ທີ່ຈະຫາຫຍັງມາກິນຈັກຢ່າງອາດຈະເປັນກະແລ້ມ ,ໂດນັດຈັກກ້ອນ ຫຼືອາຫານແຊບໆຕ່າງໆ ຍິ່ງເຮົາຄິດເຖິງມັນຫຼາຍເທົ່າໃດ ເຮົາກໍ່ຍິ່ງຕ້ອງການກິນມັນໃຫ້ໄດ້ ແລະຖ້າເຮົາຍິ່ງຄິດເຖິງມັນດົນໆແລ້ວ ເຮົາກໍ່ອາດຈະເຕັ້ນຂຶ້ນຕິດຈັກລົດແລະຂັບໄປຫຼາຍກິໂລແມັດເພື່ອຊື້ກິນໃຫ້ໄດ້ ແລະເມື່ອກິນແລ້ວກໍ່ຈຶ່ງມານັ່ງເສຍໃຈຕາມຫຼັງວ່າບໍ່ໜ້າເສຍເວລາກັບເສຍເງິນໄປຊື້ມາກິນເລີຍ.

ຖ້າມີໃຜຄົນໜຶ່ງເຮັດຜິດຕໍ່ເຮົາແລະເຮົາຄິດເຖິງສິ່ງທີ່ເຂົາເຮັດຜິດຕໍ່ເຮົາຄິດແລ້ວຄິດອີກເຮົາກໍ່ເລີ່ມໃຈຮ້າຍ ແລະອາລົມເສຍ ຄວາມຄິດຂອງເຮົາສົ່ງຜົນຕໍ່ອາລົມຂອງເຮົາ ແລະມັນຈະອອກມາເປັນຄຳເວົ້າຂອງເຮົາພ້ອມ.

## ***ທາງຊີວິດໃໝ່***

ເທື່ອຕໍ່ໄປຖ້າທ່ານເຫັນວ່າຕົວເອງອາລົມເສຍ ຫຼືເຈັບປວດໃຈ ຂໍໃຫ້ທ່ານຖາມຕົວເອງວ່າທ່ານກຳລັງຄິດຫຍັງຢູ່ ແລະທ່ານຈະພົບການເຊື່ອມຕໍ່ລະຫວ່າງຄວາມຄິດແລະຄວາມຮູ້ສຶກຂອງທ່ານ .

ຄວາມຄິດເປັນສະໜາມຣົບທີ່ເຮົາຕໍ່ສູ້ກັບມານຊາຕານໃນ (*2ໂກຣິນໂທ 10:4-5*) ສອນເຮົາວ່າເຮົາຕ້ອງຂັບໄລ່ຄວາມຄິດແລະຈິນຕະນາການທີ່ຜິດໆ ອອກໄປ ແລະນຳພວກມັນກັບມາຢູ່ພາຍໃຕ້ບັງຄັບຂອງພຣະຄຣິດ ນັ້ນໝາຍຄວາມວ່າ ເຮົາຄວນຄິດຕາມພຣະຄຳຂອງພຣະເຈົ້າ ສິ່ງໃດໆກໍ່ຕາມທີ່ບໍ່ເຫັນພ້ອມກັບຄຳສອນຂອງພຣະຄຣິດ ສິ່ງນັ້ນບໍ່ຄວນຢູ່ໃນຄວາມຄິດຂອງເຮົາ ແລະ ໃຫ້ເຮົາປະຕິເສດຄວາມຄິດເຫຼົ່ານັ້ນ ວ່າເປັນຄຳຂີ້ຕົວະຂອງມານ ຖ້າສັດຕູຂອງທ່ານ (ຊາຕານ) ສາມາດຄວບຄຸມຄວາມຄິດຂອງທ່ານໄດ້ມັນກໍ່ສາ ມາດຄວບຄຸມຊີວິດແລະຈຸດມຸ່ງໝາຍຂອງທ່ານໄດ້.

ຕົວຢ່າງ ຖ້າທ່ານມີຄວາມຄິດຂ້າຕົວຕາຍ ນັ້ນບໍ່ແມ່ນຄວາມຄິດທີ່ພຣະເຈົ້າໃສ່ເຂົ້າມາໃນທ່ານແນ່ນອນ ພຣະອົງຕ້ອງການໃຫ້ທ່ານມີຊີວິດຢູ່ ແລະຊື່ນຊົມກັບຊີວິດ ຖ້າຫາກທ່ານມີຄວາມຄິດວ່າທ່ານເອງບໍ່ດີຫຼືບໍ່ມີໃຜຮັກທ່ານ ຄວາມຄິດເຫຼົ່ານີ້ບໍ່ໄດ້ມາກຈາກພຣະເຈົ້າ ເພາະພວກມັນເປັນຄວາມຄິດທີ່ບໍ່ເຫັນພ້ອມກັບພຣະຄຳຂອງພຣະອົງ

## ຄວາມຄິດແງ່ລົບ

ຂໍໃຫ້ທ່ານ ລະມັດລະວັງກ່ຽວກັບຄວາມຄິດແງ່ລົບໃດ ໆ ກໍ່ຕາມ ໃນພຣະເຈົ້າແລະແຜນການຂອງພຣະອົງບໍ່ມີສິ່ງໃດທີ່ແງ່ລົບສຳລັບຊີວິດຂອງ

ທ່ານເລີຍ ການໄດ້ເຫັນນ້ຳເຄິ່ງຈອກກໍ່ດີກວ່າໄດ້ເຫັນອີກເຄິ່ງທີ່ບໍ່ມີນ້ຳເລີຍ ການເປັນຄົນຄິດແງ່ບວກບໍ່ເຄີຍທຳຮ້າຍໃຜ.

ບໍ່ວ່າຊີວິດຂອງທ່ານຈະເຄີຍເປັນແບບໃດມາກ່ອນ ທ່ານຕ້ອງມີນິມິດແງ່ບວກສຳລັບອະນາຄົດຂອງທ່ານ ຈົ່ງເຫັນພ້ອມກັບພຣະເຈົ້າແລະເຊື່ອວ່າສິ່ງດີໆກຳລັງເກີດຂຶ້ນກັບທ່ານ ຖ້າທ່ານເຄີຍເປັນຄົນຄິດແງ່ລົບຄືກັນ

ກັບຂ້ອຍເມື່ອກ່ອນ ທ່ານຈຳເປັນຕ້ອງຝຶກຝົນຄິດແງ່ບວກ ຂ້ອຍເຕີບໃຫຍ່ຂຶ້ນມາໃນສະພາບແວດລ້ອມທີ່ເຕັມໄປດ້ວຍສິ່ງແງ່ລົບ ແລະຄາດຫວັງວ່າຈະມີບັນຫາແລະສິ່ງຊົ່ວຮ້າຍເກີດຂຶ້ນສະເໝີ ແຕ່ໃນທີ່ສຸດຂ້ອຍກໍ່ໄດ້ຮຽນຮູ້ວ່າບັນຫາຊົ່ວຮ້າຍມັນເກີດຂຶ້ນຜ່ານທາງການຄິດແງ່ລົບຂອງເຮົານັ້ນເອງ.

## ການຄິດແບບໃໝ່

*ຄົນທຸກລຳບາກດີ້ນຣົນເປັນປະຈຳ (ຄວາມຄິດທີ່ເຕັມໄປດ້ວຍຄວາມວິດຕົກກັງວົນ) ແຕ່ໃຈຄົນທີ່ມີຈິດໃຈເປັນສຸກກໍ່ຊື່ນໃຈໄປເລື້ອຍໆ (ບໍ່ຄຳນຶງເຖິງສະຖານະການ)* ສຸພາສິດ 15:15

ເມື່ອພຣະວິນຍານບໍລິສຸດ ນຳຂ້ອຍໃຫ້ອ່ານຂໍ້ພຣະຄຳພີນີ້ ຄັ້ງທຳອິດຂ້ອຍບໍ່ຮູ້ຄວາມໝາຍ ຂອງຄຳວ່າ ໃຈວິຕົກກັງວົນ ຂ້ອຍຮູ້ວ່າມັນເປັນຄຳແງ່ລົບ ແລະເປັນຄວາມຄິດທີ່ຢ້ານວ່າບາງສິ່ງທີ່ຊົ່ວຮ້າຍຈະເກີດຂຶ້ນ ຂ້ອຍຍອມຮັບວ່າ ສິ່ງທີ່ຂ້ອຍໄດ້ຮັບນັ້ນເກີດຂຶ້ນ ຈາກສິ່ງທີ່ຂ້ອຍຄາດຫວັງຢູ່

ເກືອບທຸກເວລາ ນັ້ນກໍ່ຄືບັນຫາຊົ່ວຮ້າຍ ຂ້ອຍຢາກໃຫ້ຊີວິດປ່ຽນແປງແລະ ຂ້ອຍບໍ່ຢາກເຂົ້າໃຈວ່າ ເປັນຫຍັງພຣະເຈົ້າບໍ່ປ່ຽນແປງຊີວິດຂອງຂ້ອຍ ແຕ່ ໃນທີ່ສຸດຂ້ອຍກໍ່ໄດ້ຮູ້ວ່າ ຂ້ອຍຕ້ອງປ່ຽນຄວາມຄິດຂອງຂ້ອຍກ່ອນທີ່ພຣະ ອົງຈະສາມາດປ່ຽນຊີວິດຂອງຂ້ອຍໄດ້ .

ຢ່າເປັນຄົນຄິດແງ່ລົບກ່ຽວກັບເລື່ອງໃດໆບໍ່ວ່າຈະເປັນອະນາຄົດຫຼືອາ ດີດຂອງທ່ານ ຖ້າຫາກທ່ານໄວ້ວາງໃຈໃນພຣະເຈົ້າ ອາດີດຂອງທ່ານສາ ມາດຮວມຢູ່ໃນແຜນການທັງໝົດຂອງ ພຣະເຈົ້າສຳລັບຊີວິດຂອງທ່ານໄດ້ ຄວາມຜິດພາດທັງໝົດທີ່ທ່ານເຮັດ ສາມາດເຮັດໃຫ້ທ່ານກາຍເປັນຄົນທີ່ ສະຫຼາດແລະດີຂຶ້ນ ທ່ານສາມາດຮຽນຮູ້ຈາກຄວາມຜິດພາດແລະຕັດສິນ ວ່າຈະບໍ່ເຮັດຜິດພາດແບບນັ້ນອີກ ຢ່າຄິດແງ່ລົບກ່ຽວກັບ ການເງິນ ,ໝູ່ ເພື່ອນ,ຄອບຄົວ, ວິທີການເບິ່ງຂອງທ່ານ ວຽກງານທີ່ທ່ານມີ ຫຼືບໍ່ມີກໍ່ຕາມ , ບ່ອນຢູ່ອາໄສ,ຍີ່ຫໍ້ລົດທີ່ທ່ານມີຫຼືແມ່ນຫຍັງກໍ່ຕາມຂໍໃຫ້ທ່ານຝຶກພັດທະນາ ຄວາມຄິດແງ່ບວກ ແລະນັ້ນຈະຊ່ວຍໃຫ້ຊີວິດຂອງທ່ານເຕັມໄປດ້ວຍພະ ລັງແລະສິ່ງແງ່ບວກ.

*ການຄິດແບບໃໝ່*

## ຢ່າວິຕົກກັງວົນ

ການວິຕົກກັງວົນນັ້ນເປັນລັກສະນະຂອງຄວາມຄິດທີ່ບໍ່ດີ ຄວາມກັງ ວົນບໍ່ໄດ້ຊ່ວຍຫຍັງເຮົາຈັກຢ່າງ ແຕ່ມັນສາມາດສ້າງຄວາມເສຍຫາຍໃຫ້ ເກີດຂຶ້ນຢ່າງຫຼວງຫຼາຍ ຂໍໃຫ້ທ່ານແທນທີ່ຄວາມກັງວົນຂອງທ່ານດ້ວຍ ການໄວ້ວາງໃຈໃຫ້ພຣະເຈົ້າເບິ່ງແຍງບັນຫາທຸກຢ່າງຂອງທ່ານ ຄວາມກັງ

ວິນເຮັດໃຫ້ທ່ານເບິ່ງເຖົ້າກ່ອນອາຍຸ, ເຈັບຫົວແລະເຈັບທ້ອງ ແລະຍັງເຮັດໃຫ້ທ່ານເປັນຄົນທີ່ໂອ້ລົມນຳບໍ່ຄ່ອຍໄດ້ ຄວາມກັງວົນບໍ່ແມ່ນນ້ຳພຣະໄທຂອງພຣະເຈົ້າສຳລັບຊີວິດຂອງທ່ານເລີຍ.

ການບໍ່ວິຕົກກັງວົນອາດຈະເຮັດໄດ້ຍາກໃນຊ່ວງທຳອິດເພາະທ່ານລື້ງເຄີຍກັບການທີ່ຕ້ອງເບິ່ງແຍງຕົວເອງແລະຈັດການກັບສິ່ງທີ່ທ່ານຄວນຈະເຮັດຕໍ່ໄປ ແຕ່ຈື່ໄວ້ວ່າເວລານີ້ທ່ານກຳລັງຮຽນຮູ້ທາງຊີວິດໃໝ່.

ຄົນທ່ານບໍ່ມີພຣະເຈົ້າອາດຈະຮູ້ສຶກວ່າພວກເຂົາຕ້ອງວິຕົກກັງວົນ ແຕ່ທ່ານບໍ່ຕ້ອງເປັນແນວນັ້ນ ພຣະເຈົ້າຊົງຢູ່ຄຽງຂ້າງທ່ານ ແລະຊົງກ່າວວ່າທ່ານສາມາດລະຄວາມກະວົນ ກະວາຍໄວ້ກັບພຣະອົງແລະພຣະອົງຈະຊົງເບິ່ງແຍງທ່ານ (1ເປໂຕ5:7).

ຄວາມວິຕົກກັງວົນໝາຍເຖິງ ການທີ່ເຮົາໃຊ້ເວລາມື້ນີ້ກັບການເປັນຫ່ວງເຖິງມື້ອື່ນ ພຣະເຢຊູກ່າວວ່າບໍ່ໃຫ້ເຮົາເຮັດແບບນັ້ນ ເພາະແຕ່ລະມື້ກໍ່ມີຄວາມທຸກຫຼາຍພໍຢູ່ແລ້ວ(ມັດທາຍ6:33) ທ່ານນຈະຮູ້ວ່າຈະເຮັດຫຍັງເມື່ອເວລານັ້ນມາເຖິງ ແຕ່ທ່ານຈະບໍ່ຮູ້ເລີຍຈົນກວ່າຈະຮອດເວລານັ້ນ ພຣະເຈົ້າຊົງຕ້ອງການໃຫ້ທ່ານໄວ້ວາງໃຈພຣະອົງ ພຣະອົງບໍ່ເຄີຍຊ້າແຕ່ພຣະອົງກໍ່ມັກຈະບໍ່ມາກ່ອນລ່ວງໜ້າອີກຄືກັນ ການຄອຍຖ້າແບບນັ້ນສຳລັບຜູ້ເຊື່ອໃໝ່ອາດຈະເຮັດໄດ້ຍາກແດ່ຈັກໜ່ອຍ ເພາະຍັງບໍ່ທັນລື້ງເຄີຍແຕ່ບໍ່ດົນທ່ານກໍ່ຈະມັກມັນ ຈິດໃຈຂອງທ່ານຈະໂລ່ງ ແລະມີອິດສະຫຼະໃນການມີຊີວິດຢູ່ແຕ່ລະມື້ໂດຍບໍ່ຕ້ອງວິຕົກກັງວົນເຖິງມື້ຕໍ່ໄປ.

## *ທາງຊີວິດໃໝ່*

ແຕ່ລະຄັ້ງ ເມື່ອທ່ານຖືກທົດລອງໃຈໃຫ້ວິຕົກກັງວົນ ທ່ານກໍ່ພຽງແຕ່ເຕືອນຄວາມຈຳໃຫ້ກັບມານວ່າທ່ານເປັນລູກຂອງພຣະເຈົ້າ ແລະພຣະອົງຊົງສັນຍາວ່າຈະເບິ່ງແຍງຊີວິດຂອງທ່ານ.

ຫົນທາງທີ່ຈະປ່ຽນແປງຊີວິດຈິດໃຈຂອງທ່ານຄື ການສຶກສາແລະການຕຶກຕອງພຣະຄຳຂອງພຣະເຈົ້າ ເປັນເສັ້ນທາງແຫ່ງການຮຽນຮູ້ເຖິງຄວາມແຕກຕ່າງລະຫວ່າງ ຄວາມຄິດທີ່ຖືກແລະຄວາມຄິດທີ່ຜິດ ຕົວຢ່າງເຊັ່ນ: ຄົນຜູ້ໜຶ່ງອາດຈະຄິດວ່າລາວຈະຕ້ອງທຸກໄປຈົນຕະຫຼອດຊີວິດ ເພາະຄອບຄົວຂອງລາວທຸກຍາກ ແຕ່ທ່ານຈະພົບໃນພຣະຄຳຂອງພຣະເຈົ້າໄດ້ວ່ານັ້ນບໍ່ແມ່ນຄວາມຈິງ ດ້ວຍການຊ່ວຍເຫຼືອຂອງພຣະເຈົ້າແລະໂດຍການນຳເອົາຫຼັກການຂອງພຣະອົງມາໃຊ້ໃນເລື່ອງການເງິນ ທ່ານສາມາດທຳລາຍວົງວຽນແຫ່ງຄວາມທຸກຍາກ ແລະສາມາດມີຢ່າງພຽງພໍກິນພໍໃຊ້ໄປຕະຫຼອດຊີວິດ ພຣະຄຳຂອງພຣະເຈົ້າບອກວ່າ ເໜືອສິ່ງໃດໆພຣະເຈົ້າຊົງຕ້ອງການໃຫ້ທ່ານຈະເລີນຮຸ່ງເຮືອງ ແລະມີສຸຂະພາບທີ່ດີ ຄືກັບທີ່ວິນຍານຈິດຂອງທ່ານຈຳເລີນຂຶ້ນ(3ໂຢຮັນ2) ເມື່ອຈິດວິນຍານຂອງທ່ານຈຳເລີນຂຶ້ນເປັນຜູ້ໃຫຍ່ ແລະເດີນໃນການເຊື່ອຟັງພຣະເຈົ້າ ພຣະອົງຈະຊົງປະທານທຸກສິ່ງທີ່ດີທີ່ທ່ານສາມາດເບິ່ງແຍງແລະໃຊ້ມັນໃຫ້ເກີດປະໂຫຍດໄດ້.

ພຣະເຈົ້າຈະຕອບສະໜອງຄວາມຕ້ອງການຂອງທ່ານ ທ່ານບໍ່ຕ້ອງມີຊີວິດດ້ວຍຄວາມຢ້ານ ຖ້າທ່ານຫາວຽກເຮັດຂໍໃຫ້ທ່ານອະທິຖານແລ້ວພຣະເຈົ້າຈະຊົງຈັດຕຽມວຽກໃຫ້ແກ່ທ່ານ ພຣະເຈົ້າຈະໃຫ້ຄວາມນິຍົມຊົມຊອບໃນຊີວິດຂອງທ່ານແລະເຮັດໃຫ້ທຸກສິ່ງທີ່ທ່ານຈັບຕ້ອງນັ້ນເກີດຄວາມຈະເລີນຮຸ່ງເຮືອງແລະປະສົບຜົນສຳເລັດ.

## *ການຄິດແບບໃໝ່*

ພຣະເຢຊູຕ້ອງການໃຫ້ທ່ານມີຊີວິດທີ່ດີ ພຣະອົງຕ້ອງການໃຫ້ທ່ານມີຊີວິດທີ່ປ່ຽນສຸກ ດ້ວຍເຫດນີ້ພຣະອົງຈຶ່ງຊົງຍອມຕາຍແທນທ່ານ ຂໍໃຫ້ທ່ານຮູ້,ຂໍໃຫ້ທ່ານເຂົ້າໃຈ, ຂໍໃຫ້ທ່ານສັງເກດ ແລະຕັດສິນໃຈດີໆ ຫຼາຍຄົນຖືກທຳລາຍເພາະຂາດຄວາມຮູ້ ດັ່ງນັ້ນຈຶ່ງຂໍຄວາມຮູ້ ພຣະເຢຊູຄຣິດຊົງເປັນສະຕິປັນຍາຈາກພຣະເຈົ້າສຳລັບເຮົາ(1ໂກຣິນໂທ1:30) ພຣະອົງຊົງເສີມສ້າງສະຕິປັນຍາຂຶ້ນພາຍໃນທ່ານ ແລະຂໍພຣະອົງເຮັດໃຫ້ຄວາມຄິດຂອງທ່ານແຈ່ມແຈ້ງ ເພື່ອທ່ານຈະດຳເນີນໃນທາງຂອງພຣະອົງໄດ້ *ເພາະເຮົາຄືປັນຍາມີຄ່າກວ່າເພັດພອຍສິ່ງທີ່ເຈົ້າປາດຖະໜາຈະທຽບກັບປັນຍາບໍ່ໄດ້* (ສຸພາສິດ8:11).

## *ທາງຊີວິດໃໝ່*

ປື້ມເຫຼັ້ມທີ່ຂາຍດີທີ່ສຸດຂອງຂ້ອຍແມ່ນ "ສະໜາມຮົບໃນຄວາມຄິດ" ຂ້ອຍຂໍແນະນຳໃຫ້ທ່ານອ່ານໃຫ້ໄວທີ່ສຸດເທົ່າທີ່ຈະເຮັດໄດ້ ຂໍໃຫ້ທ່ານຈື່ໄວ້ວ່າ ການປ່ຽນແປງຄວາມຄິດນັ້ນຈະເຮັດໃຫ້ທ່ານຄືຢູ່ໃນສະໜາມຮົບ ແຕ່ມັນກໍ່ມີຈັກຊ່ວງໄລຍະໜຶ່ງເທົ່ານັ້ນ ຂໍໃຫ້ທ່ານຢ່າຍອມແພ້ ເພາະຄົນທີ່ໝັ່ນສະແຫວງຫາພຣະເຈົ້າຈະໄດ້ຮັບລາງວັນ.

# ບົດທີ 6
# ການເວົ້າແບບໃໝ່

ຄຳເວົ້າມີພະລັງອຳນາດທັງໃນດ້ານສ້າງສາ ແລະທຳລາຍ ຕັ້ງແຕ່ປະຖົມມະການ ພຣະເຈົ້າຊົງສ້າງສິ່ງດີຕ່າງໆດ້ວຍຄຳເວົ້າຂໍພຣະອົງ ດັ່ງນັ້ນ, ເຮົາຄວນເຮັດຕາມແບບຢ່າງພຣະອົງພ້ອມ.

*ຄົນຊ່າງເວົ້າກໍ່ສາມາດລ້ຽງທ້ອງຂອງຕົນ;ຄຳເວົ້າຂອງຄົນພາໃຫ້ຕົນອີ່ມທ້ອງ ຄຳເວົ້າຊີ້ຂາດຊີວິດວ່າຈະຢູ່ຫຼືຕາຍ;ຄົນຜອກບອນກໍ່ຮັບກຳຍ້ອນປາກ (ຊີວິດຫຼືຄວາມຕາຍ)* ສຸພາສິດ 18:20-21

ຂໍໃຫ້ທ່ານຕັ້ງໃຈສຶກສາພຣະຄຳພີຕອນນີ້ໃຫ້ດີເພາະຂໍ້ພຣະຄຳພີຕອນນີ້ບອກເຮົາຢ່າງຊັດເຈນວ່າ ເຮົາຕ້ອງຮັບຜົນຈາກຄຳເວົ້າຂອງເຮົາ ຄຳເວົ້າບາງຄຳກໍ່ນຳສິ່ງທີ່ດີມາແຕ່ບາງຄຳກໍ່ຊົ່ວຮ້າຍ ເມື່ອເຮົາອ້າປາກເວົ້າ ເຮົາຕ້ອງຄິດເຖິງພະລັງອຳນາດແຫ່ງຄຳເວົ້າຂອງເຮົາ ຄຳເວົ້າມາຈາກຄວາມຄິດ ດັ່ງນັ້ນມານຈຶ່ງໂຈມຕີຄວາມຄິດຂອງເຮົາກ່ອນດ້ວຍການໃສ່ຄວາມຄິດແງ່ລົບເຂົ້າມາ ມັນຮູ້ວ່າເຮົາຍອມເອົາຄວາມຄິດນັ້ນ ມາເປັນຂອງຕົວເອງ ເຮົາກໍ່ຈະຕ້ອງເວົ້າອອກມາ ແລະເມື່ອເຮົາເວົ້າມານມັນກໍ່ມີສິດເຂົ້າມາເຮັດວຽກອັນຊົ່ວຮ້າຍຂອງມັນໃນຊີວິດຂອງເຮົາໄດ້ .

# ການເວົ້າແບບໃໝ່

*ຄົນທີ່ລະວັງຄຳເວົ້າ ຄວາມເດືອດຮ້ອນບໍ່ມາຕຳ* ສຸພາສິດ 21:23

ການທົດລອງທີ່ມີຫຼາຍທີ່ສຸດໃນໂລກນີ້ກໍ່ຄື ການເວົ້າກ່ຽວກັບສິ່ງທີ່ເຮົາເຫັນ ແລະຮູ້ສຶກ ແຕ່ພຣະເຈົ້າຕ້ອງການໃຫ້ເຮົາເວົ້າກ່ຽວກັບຖ້ອຍຄຳຂອງພຣະອົງ ຂ້ອຍບໍ່ໄດ້ສະເໜີໃຫ້ທ່ານບໍ່ສົນໃຈກັບສະຖານະການໃນຊີວິດຂອງທ່ານ ແຕ່ຂ້ອຍກຳລັງເວົ້າເພື່ອໃຫ້ທ່ານມີໄຊຊະນະເໜືອສະຖານະການນັ້ນແລະວິທີການເວົ້າຂອງທ່ານເໜືອບັນຫາຕ່າງໆ ກໍ່ມີຜົນຕໍ່ບັນຫາເຫຼົ່ານັ້ນອີກດ້ວຍ.

ຊາວອິດສະຣາເອນ ຕ້ອງໃຊ້ເວລາເຖິງສີ່ສິບປີໃນທະເລຊາຍອັນແຫ້ງແລ້ງທີ່ປົກກະຕິຕ້ອງໃຊ້ເວລາເດີນທາງພຽງສິບເອັດມື້ເທົ່ານັ້ນ ພວກເຂົາຍ່າງວົນວຽນອ້ອມພູໜ່ວຍເກົ່າຊໍ້າແລ້ວຊໍ້າອີກບໍ່ໄດ້ເຄື່ອນໄປໃສ ພວກເຂົາມີບັນຫາຫຼາຍ ແລະໜຶ່ງໃນບັນຫາທີ່ໃຫຍ່ທີ່ສຸດຂອງພວກເຂົາແມ່ນ ການຈົ່ມ ພວກເຂົາຈົ່ມວ່າທຸກຄັ້ງເວລາທີ່ສິ່ງຕ່າງໆບໍ່ເປັນໄປຕາມທີ່ພວກເຂົາຕ້ອງການ ພຣະເຈົ້າຊົງຕ້ອງການໃຫ້ເຮົາສັນລະເສີນລະຂອບຄຸນພຣະອົງໃນຂະນະທີ່ຊີວິດຂອງເຮົາຕົກຢູ່ໃນຖິ່ນແຫ້ງແລ້ງກັນດານ ຄືກັບຕອນທີ່ເຮົາຢູ່ເທິງຈອມພູສູງ ສິ່ງທີ່ເຮົາເວົ້າເໜືອບັນຫາກໍ່ເປັນໂຕກຳນົດໄລຍະເວລາວ່າເຮົາຈະຕ້ອງຕິດກັບຢູ່ກັບມັນດົນປານໃດ.

ເລື່ອງນີ້ອາດຈະຟັງແລ້ວແປກໆສຳລັບທ່ານ ແຕ່ຄຳເວົ້າຂອງທ່ານມີພະລັງອຳນາດ ໃນໂຣມ 4:17 ບອກວ່າເຮົາຮັບໃຊ້ພຣະເຈົ້າຜູ້ຊົງຮຽກສິ່ງເຫຼົ່ານັ້ນທີ່ຍັງບໍ່ປະກົດໃຫ້ປະກົດຂຶ້ນ ພຣະເຈົ້າຊົງເຫັນສິ່ງທີ່ພຣະອົງ

ຊົງຕ້ອງການໃຫ້ເກີດຂຶ້ນ ແລະຊົງເວົ້າເຖິງມັນຄືກັບວ່າ ມັນມີຢູ່ແລ້ວ ການທີ່ທ່ານຈະເຮັດແບບນີ້ໄດ້ ທ່ານຈະຕ້ອງເບິ່ງດ້ວຍສາຍຕາແຫ່ງຄວາມເຊື່ອ ຄວາມເຊື່ອຄືການຮັບຮູ້ເຖິງສິ່ງທີ່ຍັງເບິ່ງບໍ່ເຫັນໃນຝ່າຍທຳມະຊາດວ່າມີຢູ່ແທ້ ຄວາມເຊື່ອຄືການຍຶດເອົາພຣະຄຳຂອງພຣະເຈົ້າແລະລົງມືກະທຳຄືກັບວ່າເປັນຄວາມຈິງ.

## ທາງຊີວິດໃໝ່

ຖ້າເຮົາມີບັນຫາ ແລະເຮົາເຊື່ອສຸດໃຈວ່າ ພຣະເຈົ້າຈະຊົງຊ່ວຍເຮົາໃຫ້ພົ້ນຈາກບັນຫານັ້ນໄດ້ ເວລານີ້ເຮົາກໍ່ມີຄວາມສຸກເຮົາບໍ່ຕ້ອງຖ້າໃຫ້ເຮົາເຫັນການປ່ຽນແປງເກີດຂຶ້ນແທ້ໆກ່ອນ ເພາະເຮົາເຫັນແລ້ວດ້ວຍຄວາມເຊື່ອເຮົາໝັ້ນໃຈເລີກໆວ່າ: ພຣະເຈົ້າຊົງກະທຳແທນເຮົາແລ້ວ.

ເມື່ອຜູ້ປະກາດພຣະຄຳ ເອເສກຽນ ເບິ່ງໄປອ້ອມຮອບລາວແນມເຫັນແຕ່ຄົນຕາຍ ກະດູກແຫ້ງເຕັມໄປໝົດ ພຣະເຈົ້າຖາມລາວວ່າຄົນຕາຍເຫຼົ່ານີ້ສາມາດກັບມີຊີວິດອີກໄດ້ບໍ່ ເອເສກຽນ ຕອບວ່າ: "ໂອ້ພຣະເຈົ້າມີແຕ່ພຣະອົງເທົ່ານັ້ນທີ່ຮູ້" ໃນການຕອບສະໜອງຕໍ່ສະຖານະການນັ້ນພຣະເຈົ້າຊົງບອກໃຫ້ລາວປະກາດພຣະຄຳ(ເວົ້າ) ຕໍ່ກະດູກແຫ້ງເຫຼົ່ານີ້ແລະບອກໃຫ້ກະດູກແຫ້ງຟັງພຣະຄຳຂອງພຣເຈົ້າ ເອເສກຽນ ຈຶ່ງເລີ່ມຕົ້ນປະກາດພຣະຄຳຕາມທີ່ລາວໄດ້ຮັບຄຳສັ່ງໃຫ້ເຮັດນັ້ນ ກະດູກແຫ້ງເລີ່ມກັບມາປະກອບເຂົ້າກັນ ມີເນື້ອໜັງແລະເສັ້ນເອັນເກີດຂຶ້ນເທິງກະດູກ ທີ່ມາຕໍ່ເຂົ້າກັນຕາມບ່ອນຂອງມັນນັ້ນ ກະດູກແຫ້ງທີ່ກັບຄືນມີຊີວິດເຫຼົ່ານີ້ຢືນຂຶ້ນເປັນກອງທັບໃຫຍ່ (ເອເສກຽນ37) ນີ້ເປັນຕົວຢ່າງອັນຍິ່ງໃຫຍ່ເຖິງຣິດອຳນາດແຫ່ງພຣະຄຳຂອງພຣະເຈົ້າ.

## ເວົ້າອອກສຽງພຣະຄຳຂອງພຣະເຈົ້າ

ຂ້ອຍສອນຄົນໃນທຸກໆແຫ່ງວ່າ ໃຫ້ເວົ້າອອກສຽງພຣະຄຳຂອງພຣະເຈົ້າ ແລະເວົ້າຢ່າງມີເປົ້າໝາຍໃນແຕ່ລະມື້ ໂດຍຝຶກໃຫ້ເປັນວິໄນສຳຄັນຝ່າຍວິນຍານ ເລື່ອງນີ້ເປັນເລື່ອງທີ່ສຳຄັນທີ່ສຸດທີ່ພຣະເຈົ້າຊົງສອນຂ້ອຍ ແລະ ຂ້ອຍສາມາດເວົ້າໄດ້ວ່າມັນຊ່ວຍປ່ຽນຈິດໃຈຂອງຂ້ອຍໃໝ່ ແລະ ອວ່າຍເຮືອແຫ່ງຊີວິດຂອງຂ້ອຍກັບຢ່າງສິ້ນເຊີງ.

## ການເວົ້າແບບໃໝ່

ພຣະຄຳຂອງພຣະເຈົ້າແມ່ນດາບແຫ່ງພຣະວິນຍານ ເປັນອາວຸດທີ່ຊົງພະລັງທີ່ສຸດທີ່ສາມາດໃຊ້ ເພື່ອຕໍ່ສູ້ກັບຊາຕານໄດ້ ຊາຕານມັນຢ້ານກົວ ແລະໂຕສັ່ນຕໍ່ພຣະຄຳຂອງພຣະເຈົ້າ ໃນລູກາ ບົດທີ 4 ເມື່ອພຣະເຢຊູຖືກມານຊາຕານທົດລອງຂະນະທີ່ຢູ່ໃນທະເລຊາຍ ພຣະອົງຊົງອົດອາຫານມາຫຼາຍມື້ແລະຊາຕານກໍ່ເລີ່ມປ້ອນຄວາມຄິດໃຫ້ກັບພຣະອົງ ແຕ່ລະຄັ້ງທີ່ມານລໍ້ລວງພຣະເຢຊູ ພຣະອົງຊົງຕອບມັນດ້ວຍຄຳວ່າ “ມີພຣະຄຳພີຂຽນໄວ້ວ່າ” ແລ້ວກໍ່ຊົງອ້າງເຖິງຂໍ້ພຣະຄຳພີເພື່ອປະຕິເສດຄຳຂີ້ຕົວະເຫຼົ່ານັ້ນ ເມື່ອເຮົາຮຽນຮູ້ທີ່ຈະເຮັດຕາມແບບຢ່າງຂອງພຣະອົງ ເຮົາກໍ່ກຳລັງເຮັດໃຫ້ທາງຂອງເຮົາເປັນທາງແຫ່ງໄຊຊະນະ.

ທ່ານຍິນດີທີ່ຈະເອົາໃຈໃສ່ຕໍ່ຄຳເວົ້າຂອງຕົນເອງບໍ ? ຖ້າທ່ານຍິນດີ ທ່ານກໍ່ຈະພົບວ່າຕົວທ່ານເອງເວົ້າຫຼາຍສິ່ງຫຼາຍຢ່າງ ທີ່ທ່ານບໍ່ຢາກໃຫ້ມັນເກີດຂຶ້ນໃນຊີວິດຂອງທ່ານເລີຍ ຂ້ອຍເຊື່ອວ່າເຮົາສາມາດເພີ່ມ ຫຼືຫຼຸດລະດັບຂອງສັນຕິສຸກແລະຄວາມຊື່ນຊົມຍິນດີຂອງເຮົາໄດ້ດ້ວຍ ພຽງແຕ່ການເວົ້າຂອງເຮົາ ຖ້າຂ້ອຍເຂົ້າໃຈຖືກຕ້ອງແລ້ວ ເປັນຫຍັງຈຶ່ງບໍ່ເວົ້າໃນສິ່ງທີ່ເຮັດໃຫ້ທ່ານມີຄວາມສຸກແທນທີ່ຈະໃຫ້ທ່ານເສົ້າລະ ?

ການເວົ້າໃນຄວາມເຊື່ອ ເປັນສ່ວນປະກອບຂອງຊີວິດໃໝ່ຂອງທ່ານ ດັ່ງນັ້ນຈົ່ງເລີ່ມຕົ້ນຕັ້ງແຕ່ເວລານີ້ ທ່ານສາມາດເວົ້າດັ່ງຕໍ່ໄປນີ້ໄດ້ :

ພຣະເຈົ້າຊົງຮັກຂ້ອຍແລະຊົງມີແຜນການທີ່ດີສຳລັບຊີວິດຂອງຂ້ອຍ

ຂ້ອຍມີຄວາມພໍໃຈຂອງພຣະເຈົ້າຢູ່ກັບຂ້ອຍໃນທຸກໆບ່ອນທີ່ຂ້ອຍໄປ

ທຸກສິ່ງທີ່ມືຂອງຂ້ອຍຈັບຕ້ອງແລະກະທຳ ສິ່ງເຫຼົ່ານັ້ນຈະຈະເລີນຮຸ່ງເຮືອງແລະປະສົບຜົນສຳເລັດ

ພຣະເຈົ້າຊົງເປີດປະຕູແຫ່ງໂອກາດໃຫ້ແກ່ຂ້ອຍແລະຊົງປິດປະຕູທີ່ບໍ່ຖືກຕ້ອງໃຫ້ແກ່ຂ້ອຍ

ຂ້ອຍເດີນໃນສະຕິປັນຍາ

ຂ້ອຍເຕັມໄປດ້ວຍສັນຕິສຸກ

ຂ້ອຍມີຄວາມຊື່ນຊົມຍິນດີ

ຂ້ອຍເດີນໃນຄວາມຮັກ

## *ທາງຊີວິດໃໝ່*

ມີບາງສິ່ງທີ່ດີກຳລັງເກີດຂຶ້ນກັບຂ້ອຍໃນວັນນີ້
ລູກຂອງຂ້ອຍທຸກຄົນຮັກແລະຮັບໃຊ້ພຣະເຈົ້າ
ຊີວິດແຕ່ງງານຂອງຂ້ອຍດີຂຶ້ນທຸກໆມື້
ຂ້ອຍເປັນພຣະພອນໃນທຸກໆບ່ອນທີ່ຂ້ອຍໄປ

ລາຍການທີ່ຈະໃຫ້ທ່ານເວົ້ານັ້ນ ມີຫຼວງຫຼາຍຢ່າງບໍ່ມີທີ່ສິ້ນສຸດ ຂໍໃຫ້ທ່ານກວດສອບໃຫ້ໝັ້ນໃຈວ່າ ທ່ານກຳລັງເວົ້າໃນສິ່ງທີ່ເປັນພຣະຄຳຂອງພຣະເຈົ້າ ການເຫັນພ້ອມກັບພຣະເຈົ້າຈະເປີດໂລກໃໝ່ໃຫ້ແກ່ທ່ານມັນຈະ ເຮັດໃຫ້ແຜນການຂອງພຣະເຈົ້າເປັນຈິງ ແລະບໍ່ມີມານໂຕໃດທີ່ຈະຢຸດຢັ້ງສິ່ງນີ້ໄດ້ .

# ບົດທີ 7
# ເບິ່ງຕົວເອງດ້ວຍສາຍຕາໃໝ່

ທ່ານເບິ່ງຕົວເອງດ້ວຍສາຍຕາແບບໃດ? ພາບພົດຂອງຕົວເອງເປັນຄື ກັບຮູບຖ່າຍທີ່ເກັບໄວ້ໃນປຶ້ມແຫ່ງຫົວໃຈຂອງທ່ານ ຂ້ອຍຄົ້ນພົບວ່າຕະ ຫຼອດເວລາຫຼາຍຕໍ່ຫຼາຍປີທີ່ຂ້ອຍເຮັດພັນທະກິດກັບຄົນ ພວກເຂົາສ່ວນ ຫຼາຍບໍ່ມັກຕົວເອງແທ້ໆ ຂ້ອຍກໍ່ມີບັນຫາຄວາມສຳພັນທີ່ບໍ່ດີກັບຕົວເອງ ມາດົນຫຼາຍປີແລະມັນທຳລາຍທຸກສິ່ງໃນຊີວິດຂອງຂ້ອຍ ພຣະເຈົ້າຊົງຮັກ ທ່ານແລະພຣະອົງຊົງຕ້ອງການໃຫ້ທ່ານຮັກຕົວເອງ ບໍ່ແມ່ນດ້ວຍເຫັນແກ່ ຕົວຫຼືເອົາຕົວເອງເປັນສູນກາງແຕ່ຮັກຕົວເອງຢ່າງຖືກຕ້ອງ ທ່ານບໍ່ສາມາດ ຍື່ນສິ່ງທີ່ທ່ານບໍ່ມີໃຫ້ແກ່ຄົນອື່ນ ພຣະເຈົ້າຊົງຮັກເຮົາແລະຊົງຕ້ອງການໃຫ້ ເຮົາຍອມປ່ອຍໃຫ້ຄວາມຮັກນັ້ນຮັກສາຕົວເຮົາເອງກ່ອນແລ້ວຈຶ່ງຄ່ອຍໄຫຼ ຜ່ານຊີວິດທ່ານໄປສູ່ຜູ້ອື່ນ ຖ້າທ່ານປະຕິເສດທີ່ຈະຍອມຮັບຄວາມຮັກ ທີ່ພຣະເຈົ້າຊົງມີໃຫ້ແກ່ທ່ານດ້ວຍຄວາມຮັກຕົວເອງກ່ອນແລ້ວ ທ່ານກໍ່ບໍ່ ສາມາດຮັກຄົນອື່ນໄດ້ຢ່າງແທ້ຈິງໄດ້.

ຄວາມຄິດເຫັນຂອງທ່ານຂຶ້ນຢູ່ກັບການກະທຳຂອງທ່ານເອງ ຫຼື ບໍ່? ພວກເຮົາສ່ວນຫຼາຍມັກຈະເປັນແນວນີ້ ແລະຄວາມຄິດເຫັນຂອງເຮົາຈຶ່ງ ບໍ່ສາມາດດີໄດ້ເລີຍ ເພາະການກະທຳຂອງເຮົາມັນບໍ່ໄດ້ດີຕະຫຼອດເວລາ ເຮົາເປັນມະນຸດທີ່ບໍ່ສົມບູນແລະເຮົາກໍ່ຜິດພາດສະເໝີ ເຮົາຕ້ອງເຮັດສິ່ງທີ່ ຖືກຕ້ອງແຕ່ເບິ່ງຄືວ່າເຮົາຈະເຮັດຜິດພາດສະເໝີ ນີ້ຈຶ່ງເປັນເຫດຜົນທີ່ເຮົາ

ຈຳເປັນຕ້ອງການພຣະເຢຊູ ພຣະອົງຊົງສຳແດງກຳລັງຂອງພຣະອົງຢ່າງສົມບູນໃນຄວາມອ່ອນແອຂອງເຮົາ.

ທ່ານບໍ່ໄດ້ແປກປະຫຼາດສຳລັບພຣະເຈົ້າ ພຣະອົງຊົງຮູ້ຈັກວ່າທ່ານເປັນແນວໃດ ເມື່ອເຊີນທ່ານໃຫ້ເຂົ້າສູ່ການມີຄວາມສຳພັນກັບພຣະອົງ ພຣະອົງຊົງຮູ້ແລ້ວວ່າມີຄວາມຜິດພາດຫຍັງແດ່ ທີ່ເຮົາເຮັດໃນຊີວິດ ແຕ່ພຣະອົງກໍ່ຊົງຮັກເຮົາບໍ່ວ່າເຮົາຈະເປັນແນວໃດກໍ່ຕາມ ຢ່າຮ້າຍດ່າຕົນເອງຫຼາຍ ຈົ່ງຮຽນຮູ້ທີ່ຈະຮັບພຣະເມດຕາຂອງພຣະເຈົ້າໃນເລື່ອງພື້ນຖານປະຈຳວັນ ຕື່ນຂຶ້ນມາທຸກມື້ ແລະເຮັດໃຫ້ດີທີ່ສຸດເພື່ອຖວາຍກຽດແດ່ພຣະເຈົ້າ ເຮັດໃຫ້ດີທີ່ສຸດ ເພາະວ່າທ່ານຮັກພຣະເຈົ້າບໍ່ແມ່ນເຮັດເພື່ອໃຫ້ພຣະເຈົ້າຮັກທ່ານ ພຣະອົງຮັກທ່ານຫຼາຍເທົ່າທີ່ພຣະອົງຈະຮັກໄດ້ຢູ່ແລ້ວ ຄວາມຮັກຂອງພຣະອົງກໍ່ສົມບູນແບບ ເມື່ອສິ້ນສຸດຂອງແຕ່ລະມື້ ຂໍພຣະເຈົ້າຍົກໂທດສຳລັບຄວາມບາບ ແລະຄວາມຜິດພາດທັງໝົດຂອງທ່ານແລ້ວນອນຫຼັບໃຫ້ສະບາຍແລະເລີ່ມຕື່ນມາວັນໃໝ່ດ້ວຍຄວາມສົດຊື່ນຕໍ່ໄປ .

ຊາຕານມັນຕໍ່ຕ້ານທ່ານ ແຕ່ພຣະເຈົ້າຊົງປົກປ້ອງທ່ານ ທ່ານຈຳເປັນຕ້ອງຢູ່ຄຽງຂ້າງພຣະເຈົ້າ ເພາະເມື່ອມີສອງຄົນເຫັນພ້ອມກັນພວກເຂົາກໍ່ເຕັມໄປດ້ວຍພະລັງອຳນາດ ໃນສາຍຕາຂອງພຣະເຈົ້າ ທ່ານເປັນຄົນທີ່ມີຄຸນ ແລະທ່ານມີຄວາມສາມາດທີ່ໃຊ້ໃຫ້ເປັນປະໂຫຍດເພື່ອພຣະເຈົ້າໄດ້ຢ່າພຽງ ແຕ່ວ່າເບິ່ງທຸກສິ່ງທີ່ທ່ານຄິດວ່າມັນຜິດປົກກະຕິໃນຊີວິດຂອງທ່ານຢ່າພຽງ ແຕ່ເບິ່ງວ່າທ່ານຈະໄປໄດ້ໄກປານໃດ ແລະຢ່າເບິ່ງວ່າທ່ານມາໄດ້ໄກປານໃດຄືກັນ ເວລານີ້ທ່ານເປັນຜູ້ເຊື່ອໃນພຣະເຢຊູຄຣິດແລະນັ້ນເປັນການ ເລີ່ມຕົ້ນຂອງທຸກສິ່ງທີ່ອັດສະຈັນໃນຊີວິດ.

*ການເບິ່ງຕົວເອງດ້ວຍສາຍຕາໃໝ່*

# ການເຂົ້າໃຈເລື່ອງຄວາມຊອບທຳ

ຄວາມຊອບທຳ (ມີສິດໃນການຢືນຢູ່ຕໍ່ໜ້າພຣະເຈົ້າ) ມີໄດ້ໂດຍຜ່ານທາງຄວາມເຊື່ອໃນພຣະເຢຊູ ບໍ່ແມ່ນດ້ວຍການກະທຳຂອງເຮົາເອງ ເປັນຂອງປະທານຈາກພຣະເຈົ້າ ແລະທ່ານໄດ້ຮັບໃນເວລາ ທີ່ທ່ານຕ້ອນຮັບພຣະເຢຊູໃນຖານະພຣະຜູ້ຊ່ວຍໃຫ້ລອດພົ້ນ ມີຂໍ້ພຣະຄຳພີຫຼາຍຂໍ້ທີ່ສາມາດສະໜັບສະໜູນຄຳເວົ້ານີ້ ຂ້ອຍຈະບອກໃຫ້ທ່ານຈັກສອງຫຼືສາມຂໍ້ເພື່ອເປັນການໜູນໃຈ

*ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ(ຢ່າງແທ້ຈິງ) ໄດ້ເຂົ້າສ່ວນກັບຄວາມຜິດຂອງພວກເຮົາ ເພື່ອພວກເຮົາຈະໄດ້ເຂົ້າສ່ວນໃນຄວາມຊອບທຳຂອງພຣະເຈົ້າ ໂດຍທາງພຣະອົງ (ສິ່ງທີ່ເຮົາຄວນຈະເປັນ ຜ່ານການພິສູດແລະໄດ້ຮັບການຍອມຮັບໃນຄວາມສຳພັນອັນຖືກຕ້ອງກັບພຣະອົງ ໂດຍຄວາມດີຂອງພຣະອົງ)*

1ໂກຣິນໂທ 5:21

**ວ້າວ** ! ຊ່າງເປັນຂໍ້ພຣະຄຳພີທີ່ດີແທ້ໆ ພຣະຄຣິດຊົງບໍ່ມີບາບແຕ່ເພາະຄວາມຮັກທີ່ມີຕໍ່ເຮົາ ເຮັດໃຫ້ພຣະອົງຍອມຮັບສະພາບບາບແທນເຮົາເພື່ອເຮົາຈະໄດ້ມີຄວາມສຳພັນອັນດີເລີດກັບພຣະບິດາ ເວລານີ້ພຣະເຈົ້າຊົງແນມເບິ່ງເຮົາວ່າຜ່ານການພິສູດ ແລະເປັນທີ່ຍອມຮັບແລ້ວ ແລະມີສິດທີ່ຈະຢືນຕໍ່ໜ້າພຣະອົງໄດ້ ເພາະເຮົາຍອມຮັບພຣະເຢຊູໃນຖານະພຣະຜູ້ຊ່ວຍໃຫ້ລອດ ຂ້ອຍຢາກຈະຮ້ອງອີກເທື່ອໜຶ່ງວ່າ **ວ້າວ!**

ແທນທີ່ຈະຕ້ອງມານັ່ງຢ້ານວ່າ ພຣະເຈົ້າຈະບໍ່ຊົງພໍພຣະໄທແລະຄຽດແຄ້ນເຮົາ ແຕ່"ໃນພຣະຄຣິດ"ເຮົາພັດສາມາດຢືນຢູ່ຕໍ່ໜ້າພຣະອົງແລະຮູ້ວ່າເຮົາເປັນທີ່ຍອມຮັບແລ້ວ

## *ທາງຊີວິດໃໝ່*

*ເພາະວ່າໃນສາຍຕາຂອງພຣະເຈົ້າແລ້ວ ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຄົນຊອບທໍາ(ເຮັດໃຫ້ຊອບທໍາ,ພົ້ນຜິດແລະເປັນທີ່ຍອມຮັບ) ດ້ວຍການເຮັດຕາມກົດບັນຍັດ, ເພາະວ່າ (ບົດບາດທີ່ແທ້ຈິງຂອງ ) ກົດບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ* ໂຣມ 3:20

*ຄືຄວາມຊອບທໍາທີ່ມາຈາກພຣະເຈົ້າ ຊຶ່ງຊົງປະທານ(ມີຄວາມໝາຍ ) ແກ່ຜູ້ທີ່ເຊື່ອທຸກຄົນ ດ້ວຍອາໄສຄວາມເຊື່ອໃນພຣະເຢຊູຄຣິດເຈົ້າ (ພຣະເມຊີອາ) ເພາະວ່າຄົນທັງຫຼາຍສະເໝີພາບກັນທຸກຄົນ*

ໂຣມ3:22

*ແຕ່ພວກເຮົາກໍ່ຮູ້ຢູ່ວ່າ ບໍ່ມີຜູ້ໃດຖືກຊົງຖືວ່າເປັນຄົນຊອບທໍາ ໂດຍການປະຕິບັດຕາມກົດບັນຍັດ ແຕ່ໂດຍທາງຄວາມເຊື່ອໃນພຣະເຢຊູຄຣິດເຈົ້າເທົ່ານັ້ນ ເຖິງແມ່ນພວກເຮົາກໍ່ຍັງເຊື່ອວາງໃຈໃນພຣະເຢຊູຄຣິດເຈົ້າເພື່ອຈະໄດ້ຊົງຖືວ່າເປັນຄົນຊອບທໍາ ໂດຍຄວາມເຊື່ອໃນພຣະຄຣິດ ບໍ່ແມ່ນໂດຍການປະຕິບັດຕາມກົດບັນຍັດ ເພາະວ່າໂດຍການປະຕິບັດຕາມກົດບັນຍັດນັ້ນ" ບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຄົນຊອບທໍາໄດ້"*

ຄາລາເຕຍ 2:16

ເປັນສິ່ງສໍາຄັນຕໍ່ການຈະເລີນເຕີບໂຕຝ່າຍວິນຍານຂອງທ່ານທີ່ຈະໄດ້ເຫັນຕົວຂອງທ່ານເອງ ມີສິດໃນການຢືນຢູ່ຕໍ່ໜ້າພຣະເຈົ້າ ໂດຍຜ່ານທາງຄວາມເຊື່ອໃນພຣະເຢຊູຄຣິດນັ້ນເປັນຂອງປະທານຈາກພຣະເຈົ້າ ຖ້າເຮົາຮູ້ສຶກວ່າບໍ່ດີກ່ຽວກັບຕົວເອງຕະຫຼອດເວລາ ມີຄວາມສົງໄສສະເໝີວ່າພຣະເຈົ້າຮ້າຍເຮົາຫຼືບໍ່ ເຮົາກໍ່ສູນເສຍພະລັງອໍານາດ ທີ່ພຣະເຈົ້າຕ້ອງການໃຫ້ເຮົາມີ ໃນຖານະຜູ້ເຊື່ອໃນພຣະເຢຊູຄຣິດ ເຮົາມີສິດທິອໍານາດເໜືອມານຊາຕານ ແຕ່ເຮົາຕ້ອງຢືນຢູ່ຕໍ່ໜ້າພຣະເຈົ້າແລະນຸ່ງເສື້ອແຫ່ງຄວາມຊອບທໍາບໍ່ແມ່ນຫຸ້ມຫໍ່ດ້ວຍຜ້າແພແຫ່ງການຟ້ອງຜິດແລະຕໍານິກ່າວໂທດ.

# ການເບິ່ງຕົວເອງແບບໃໝ່

ໃນເອເຟໂຊ ບົດທີ 6 ບອກເຮົາຕ້ອງສວມໃສ່ເກາະປ້ອງກັນເອິກແຫ່ງຄວາມຊອບທຳ ສຳລັບທະຫານແລ້ວເກາະປ້ອງກັນເອິກເປັນສິ່ງທີ່ປ້ອງກັນຫົວໃຈຂອງເຂົາ ແມ່ນຫຍັງຄືສິ່ງທີ່ທ່ານເຊື່ອກ່ຽວກັບຕົນເອງ ? ທ່ານສາມາດດຳເນີນຊີວິດດ້ວຍຄວາມເຊື່ອ ເພື່ອທ່ານຈະມີສິດຢືນຢູ່ຕໍ່ໜ້າພຣະເຈົ້າໄດ້ບໍ່ ? ທ່ານສາມາດປັກສາຍຕາຂອງທ່ານໄປທີ່ສິ່ງທີ່ພຣະເຢຊູຊົງກະທຳເພື່ອທ່ານ ບໍ່ແມ່ນຄວາມຜິດພາດໃນຊີວິດຂອງທ່ານເອງ ທ່ານຈະຜິດພາດແນ່ນອນເມື່ອທ່ານຜິດພາດຂໍ້ນີ້ ຂໍໃຫ້ທ່ານຮັບກັບໃຈແລະຮັບການຍົກໂທດຈາກພຣະເຈົ້າ ນີ້ເປັນວິທີການດຽວທີ່ຈະເຮັດໃຫ້ເຮົາສາມາດດຳເນີນຊີວິດຢູ່ໃນຄວາມຊອບທຳໄດ້ ເຮົາບໍ່ໄດ້ດຳເນີນຊີວິດໃນຄວາມຊອບທຳຂອງເຮົາເອງ ເພາະຄວາມຊອບທຳຂອງເຮົາເປັນຄືກັບຜ້າເປິເປື້ອນ ແຕ່ສາມາດແລະຄວນດຳເນີນຊີວິດໃນຄວາມຊອບທຳຂອງພຣະເຈົ້າໂດຍຜ່ານທາງຄວາມເຊື່ອໃນພຣະເຢຊູຄຣິດ .

ນີ້ເປັນທັດສະນະຄະຕິໃໝ່ທີ່ທ່ານສາມາດມີຕໍ່ຕົນເອງໄດ້ຕັ້ງແຕ່ເວລານີ້ແລະນີ້ເປັນສ່ວນປະກອບຂອງ"ຊີວິດໃໝ່" ໃນຖານະຜູ້ເຊື່ອໃນພຣະເຢຊູ

# ຊື່ນຊົມກັບຕົວເອງ

ເວລານີ້ທ່ານມີອິດສະຫຼະທີ່ຈະຊື່ນຊົມກັບຕົວເອງໄດ້ແລ້ວແລະການທີ່ທ່ານເຮັດແນວນັ້ນເປັນນຳເພຣະໄທຂອງພຣະເຈົ້າ ຢ່າໃຫ້ຄຸນຄ່າຂອງຕົວທ່ານເອງຂຶ້ນຢູ່ກັບຄຳເວົ້າຂອງຄົນອື່ນ ຢ່າໃຫ້ມັນຂຶ້ນຢູ່ກັບສິ່ງທີ່ຄົນອື່ນປະຕິບັດຕໍ່ທ່ານ ຫຼືຂຶ້ນກັບຄວາມສຳເລັດໃນຊີວິດຂອງທ່ານເອງ ພຣະເຈົ້າຊົງ

ຄິດວ່າທ່ານມີຄຸນຄ່າພຽງພໍຈຶ່ງໄດ້ສົ່ງພຣະບຸດອົງດຽວຂອງພຣະອົງມາຕາຍ ເພື່ອທ່ານ ພຽງແຕ່ເຫດຜົນນີ້ກໍ່ເກີນພໍທີ່ຈະຊື່ນຊົມໄດ້ແລ້ວ.

ພຣະຄຳພີສອນເຮົາໄວ້ຢ່າງຊັດເຈນວ່າ ພຣະເຈົ້າຊົງຕ້ອງການໃຫ້ເຮົາຊື່ນຊົມຍິນດີກັບຊີວິດ ແຕ່ມັນເປັນໄປບໍ່ໄດ້ເລີຍຖ້າທ່ານບໍ່ຮູ້ຈັກຊື່ນຊົມຍິນດີກັບຕົວເອງກ່ອນ ທ່ານເປັນບຸກຄົນໜຶ່ງທີ່ທ່ານບໍ່ສາມາດແຍກໂຕອອກຫ່າງໄດ້ ບໍ່ໄດ້ແມ່ນແຕ່ຈັກວິນາທີດຽວ ຖ້າທ່ານບໍ່ສາມາດຊື່ນຊົມກັບຕົວເອງໄດ້ ທ່ານກໍ່ເປັນຄົນທີ່ມີຊີວິດທີ່ທຸກຍາກທີ່ສຸດ.

## *ທາງຊີວິດໃໝ່*

ທ່ານອາດຈະເບິ່ງແຕກຕ່າງຈາກຄົນອື່ນໆ ທີ່ທ່ານຮູ້ຈັກ ແຕ່ນັ້ນກໍ່ບໍ່ແມ່ນບັນຫາ ແທ້ຈິງແລ້ວ ພຣະເຈົ້າຊົງມີຈຸດປະສົງບາງຢ່າງ ພຣະອົງຊົງສ້າງເຮົາແຕ່ລະຄົນມາບໍ່ຄືກັນ ພຣະອົງຊົງມີຄວາມຫຼາກຫຼາຍ ທ່ານບໍ່ໄດ້ແປກປະຫຼາດ ທ່ານມີເອກະລັກຂອງຕົວເອງ ເຊິ່ງມີຄຸນຄ່າອັນຍິ່ງໃຫຍ່ກວ່າສິ່ງໃດໆ ທີ່ໄປຮຽນແບບມາຈາກອັນອື່ນ.

ຢ່າປຽບທຽບຕົວເອງກັບຄົນອື່ນ ແລະໃຊ້ເວລາທັງຊີວິດ ເພື່ອແຂ່ງຂັນກັບພວກເຂົາ (2ໂກຣິນໂທ 10:12) ຈົ່ງເປັນໂຕຂອງທ່ານເອງ ແລະຊື່ຊົມຍິນດີກັບສິ່ງທີ່ທ່ານເປັນນັ້ນ ທ່ານຈຳເປັນຕ້ອງປ່ຽນແປງຊີວິດທີ່ເຫຼືອຢູ່ຂອງທ່ານ ພຣະວິນຍານບໍລິສຸດຈະເປັນຜູ້ເຮັດວຽກເພື່ອໃຫ້ເກີດການປ່ຽນແປງໃນຊີວິດສ່ວນທີ່ເຫຼືອຂອງທ່ານຢ່າງເອົາຈິງເອົາຈັງ ຂ່າວດີກໍ່ຄືທ່ານສາມາດເປັນອິດສະຫຼະໃນການຊື່ນຊົມຍິນດີກັບຕົວເອງໄດ້ໃນຂະນະທີ່ຂະບວນການເຮັດວຽກນັ້ນກຳລັງດຳເນີນໄປ.

# ບົດທີ 8
# ການແລກປ່ຽນລະຫວ່າງຄວາມຢ້ານກັບຄວາມເຊື່ອ

ເຮົາທຸກຄົນຕ່າງກໍ່ຮູ້ວ່າເວລາມີຄວາມຢ້ານກົວແລ້ວຮູ້ສຶກແນວໃດ ມັນຊ່າງທໍລະມານແລະຂັດຂວາງຄວາມກ້າວໜ້າຂອງເຮົາແທ້ໆ ຄວາມຢ້ານສາມາດເຮັດໃຫ້ຕົກໃຈ ເຮັດໃຫ້ເຮົາເຄັ່ງຕຶງ ຮູ້ສຶກອ່ອນແຮງ ແລ່ນໜີຈາກສິ່ງທີ່ເຮົາຕ້ອງປະເຊີນໜ້າ.

ຄວາມຢ້ານບໍ່ໄດ້ມາຈາກພຣະເຈົ້າ ແຕ່ມັນເປັນເຄື່ອງມືຂອງຊາຕານທີ່ໃຊ້ ເພື່ອຂັດຂວາງເຮົາຈາກການມີຊີວິດທີ່ດີ ແບບທີ່ພຣະເຈົ້າຕ້ອງການ (2ຕີໂມທຽວ 1:7) ພຣະເຈົ້າຊົງຕ້ອງ ການໃຫ້ເຮົາມີຊີວິດຢູ່ໃນຄວາມເຊື່ອ ຄວາມເຊື່ອແມ່ນການເອົາຕົນຕົວຂອງເຮົາທັງໝົດໄປເພິ່ງພາໃນພຣະເຈົ້າ ເປັນການໄວ້ວາງໃຈ ແລະເຊື່ອໝັ້ນໃນ ຣິດອຳນາດ, ພຣະປັນຍາ ແລະຄວາມດີຂອງພຣະເຈົ້າຢ່າງແທ້ຈິງ ຄວາມເຊື່ອເປັນພິຍານຫຼັກຖານເຖິງສິ່ງທີ່ເຮົາຍັງເບິ່ງບໍ່ເຫັນແລະເຊື່ອໝັ້ຍຢ່າງເຕັມທີ່ວ່າສິ່ງນັ້ນມີຢູ່ແທ້ .

ຄວາມເຊື່ອເຮັດວຽກໃນມິຕິຝ່າຍວິນຍານ ທ່ານອາດຈະລຶ້ງເຄີຍກັບຄວາມເຊື່ອໃນສິ່ງທີ່ທ່ານສາມາດເບິ່ງເຫັນ ແລະເຈັບຕ້ອງໄດ້ເທົ່ານັ້ນ ແຕ່ໃນຖານະລູກຂອງພຣເຈົ້າ ທ່ານຈຳເປັນທີ່ຈະຕ້ອງທຳຄວາມລຶ້ງເຄີຍກັບການມີຊີວິດຢູ່ໃນມິຕິທີ່ທ່ານບໍ່ສາມາດເບິ່ງເຫັນ (ມິຕິຝ່າຍວິນຍານ)

ເຮົາບໍ່ສາມາດເບິ່ງເຫັນພຣະເຈົ້າໄດ້ ເພາະພຣະອົງເປັນພຣະວິນຍານ ແຕ່ເຮົາເຊື່ອຢ່າງໝັ້ນຄົງໃນພຣະອົງ ປົກກະຕິແລ້ວເຮົາຈະແນມບໍ່ເຫັນທູດສະຫວັນ ແຕ່ພຣະຄຳຂອງພຣະເຈົ້າບອກວ່າ ພວກເຂົາຢູ່ອ້ອມຂ້າງເພື່ອເຝົ້າປົກປ້ອງເຮົາ ດ້ວຍການປົດປ່ອຍຄວາມເຊື່ອຂອງເຮົາໃນພຣະເຈົ້າ ແລະໃນພຣະຄຳຂອງພຣະອົງ ເຮົາສາມາດເຂົ້າໄປເຖິງມິຕິຝ່າຍວິນຍານ ແລະດຶງເອົາສິ່ງທີ່ພຣະເຈົ້າຕ້ອງການໃຫ້ເຮົາມີ ເພື່ອຄວາມຊື່ນຊົມແຕ່ຍັງທັນເກີດຂຶ້ນແທ້ອອກມາໄດ້.

## ທາງຊີວິດໃໝ່

ຊາຕານ ມັນດີໃຈທີ່ສາມາດຮຽກຮ້ອງຄວາມສົນໃຈຂອງເຮົາ ໃຫ້ໄປຢູ່ໃນສະຖານະການແລະເຮັດໃຫ້ເຮົາຢ້ານອະນາຄົດ ແຕ່ສຳລັບພຣະເຈົ້າແລ້ວພຣະອົງຊົງຕ້ອງການໃຫ້ເຮົາໄວ້ວາງໃຈໃນພຣະອົງ ເຊື່ອວ່າພຣະອົງຊົງຍິ່ງໃຫຍ່ກວ່າສະຖານະການ ຫຼືການຮຸກຮານໃດໆ ຂອງມານຊາຕານ.

ພຣະຄຳພີ ເຕັມໄປດ້ວຍຕົວຢ່າງທີ່ດີເລີດຂອງ ຜູ້ຊາຍ ແລະ ແມ່ຍິງທີ່ເຫັນວ່າ ຕົວຂອງພວກເຂົາເອງຢູ່ໃນສະຖານະການທີ່ໝົດຫວັງ ແລະມີຄວາມຢ້ານຈົນເຕັມຫົວໃຈ ແຕ່ພວກເຂົາຕັດສິນໃຈເຊື່ອໃນພຣະເຈົ້າ ແລະພວກເຂົາກໍ່ໄດ້ເຫັນຄວາມຊ່ວຍເຫຼືອອັນຍິ່ງໃຫຍ່ຂອງພຣະອົງ ທ່ານຕ້ອງຕັດສິນໃຈວ່າຈະມີຊີວິດຢູ່ໂດຍຄວາມຢ້ານຫຼືໂດຍຄວາມເຊື່ອ ເຖິງແມ່ນວ່າເວລານີ້ທ່ານຈະເປັນຄຣິສຕຽນແລ້ວ ແຕ່ທ່ານກໍ່ຍັງສາມາດມີຊີວິດຢູ່ຢ່າງທຸກທໍລະມານດ້ວຍຄວາມຢ້ານໃນທຸກຮູບແບບ ທ່ານຈະຫຼຸດພົ້ນໄດ້ກໍ່ຕໍ່ເມື່ອທ່ານຕັດສິນໃຈທີ່ຈະມີຊີວິດຢູ່ໂດຍຄວາມເຊື່ອ ທ່ານໄດ້ຕ້ອນຮັບ

ພຣະເຢຊູໃນຖານະພຣະຜູ້ຊ່ວຍໃຫ້ລອດໂດຍຄວາມເຊື່ອແລ້ວ ຂັ້ນຕໍ່ໄປທ່ານຕ້ອງຮຽນຮູ້ທີ່ຈະມີຊີວິດຢູ່ໂດຍຄວາມເຊື່ອ.

> *ເພາະວ່າໃນຂ່າວປະເສີດນັ້ນ ມີຄວາມຊອບທຳຂອງພຣະເຈົ້າໂດຍເລີ່ມຕົ້ນດ້ວຍຄວາມເຊື່ອແລະສຸດທ້າຍກໍດ້ວຍຄວາມເຊື່ອຢ່າງດຽວ ດັ່ງທີ່ມີຄຳຂຽນໄວ້ໃນພຣະຄຳພີວ່າ "ຜູ້ຊຶ່ງຖືວ່າ ເປັນຄົນຊອບທຳເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫຼະຈະໄດ້ຊີວິດ"* ໂຣມ 1:17

ເມື່ອເຮົາເຂົ້າໃຈເຖິງຄວາມຮັກຂອງພຣະເຈົ້າແລະຮັບຮູ້ວ່າເຮົາມີການຖືກເຮັດໃຫ້ຊອບທຳຕໍ່ພຣະເຈົ້າໄດ້ໂດຍຜ່ານການສິ້ນພຣະຊົນ ແລະເປັນຄືນມາຂອງພຣະເຢຊູແລ້ວ ເຮົາກໍ່ພົບວ່າການດຳເນີນໃນຄວາມເຊື່ອນັ້ນເປັນເລື່ອງທີ່ງ່າຍ ເຮົາກໍ່ຈະເລີ່ມໄວ້ວາງໃຈໃຫ້ພຣະເຈົ້າເບິ່ງແຍງຊີວິດຂອງເຮົາຫຼາຍກວ່າການຮູ້ສຶກວ່າ ເຮົາຕ້ອງຈັດການກັບມັນດ້ວຍໂຕຂອງເຮົາເອງ.

## *ການແລກປ່ຽນລະຫວ່າງຄວາມຢ້ານກັບຄວາມເຊື່ອ*

ການມີຄວາມກ້າບໍ່ໄດ້ໝາຍຄວາມວ່າ ເຮົາຈະບໍ່ມີຄວາມຢ້ານກົວຢູ່ເລີຍ ແຕ່ຄວາມກ້າສະແດງໃຫ້ເຫັນເມື່ອຢູ່ທ່າມກາງຄວາມຢ້ານ ເມື່ອພຣະເຈົ້າບອກໃຫ້ຜູ້ຮັບໃຊ້ຂອງພຣະອົງວ່າຢ່າຢ້ານ ພຣະອົງຈະບໍ່ສັ່ງໃຫ້ພວກເຂົາບໍ່ຮູ້ສຶກຢ້ານກົວ ແຕ່ພຣະອົງກຳລັງບອກພວກເຂົາໃຫ້ເຊື່ອຟັງພຣະອົງ ບໍ່ວ່າພວກເຂົາຈະຮູ້ສຶກແນວໃດກໍ່ຕາມ ພຣະເຈົ້າຊົງຮູ້ວ່າວິນຍານແຫ່ງຄວາມຢ້ານ ຈະຖ່ວງດຶງເຮົາໄວ້ຈາກການເຕີບໂຕໃນການດຳເນີນ

ຊີວິດກັບພຣະອົງ ດ້ວຍເຫດນັ້ນພຣະອົງຈຶ່ງຊົງບອກເຮົາໃນພຣະຄຳຂອງພຣະອົງຫຼາຍຄັ້ງຫຼາຍຫົນວ່າ ພຣະອົງຊົງຢູ່ກັບເຮົາຕະຫຼອດເວລາ ດັ່ງນັ້ນບໍ່ຕ້ອງກົ້ມຫົວໃຫ້ກັບຄວາມຢ້ານອີກຕໍ່ໄປ.

ເອລເອເນີ ຣູສເວລ ກ່າວວ່າ:"ກຳລັງ,ຄວາມກ້າຫານ ແລະຄວາມເຊື່ອໝັ້ນຂອງທ່ານຈະເພີ່ມຂຶ້ນ ເມື່ອທ່ານຢຸດທີ່ຈະເຮັດໃຫ້ສີໜ້າຂອງທ່ານເຕັມໄປດ້ວຍຄວາມຢ້ານ ທ່ານຕ້ອງເຮັດໃນສິ່ງທີ່ທ່ານຄິດວ່າເຮັດບໍ່ໄດ້"

*ຈົ່ງເດັດດ່ຽວແລະກ້າຫານ ຢ່າຢ້ານເຂົາ ພຣະເຈົ້າຂອງພວກເຈົ້າຄືພຣະຜູ້ເປັນເຈົ້າເອງຈະສະຖິດຢູ່ກັບພວກເຈົ້າ ພຣະອົງຈະບໍ່ເຮັດໃຫ້ພວກເຈົ້າຜິດຫວັງຫຼືປະຖິ້ມພວກເຈົ້າ "* ພຣະບັນຍັດສອງ 31:6

ຄວາມເຊື່ອເທົ່ານັ້ນທີ່ເຮັດໃຫ້ພຣະເຈົ້າພໍໃຈ ເຮົາໄດ້ຮັບຈາກພຣະເຈົ້າໂດຍຜ່ານທາງຄວາມເຊື່ອ ດ້ວຍເຫດນີ້ສິ່ງສຳຄັນສູງສຸດສຳລັບຜູ້ເຊື່ອໃໝ່ໃນພຣະຄຣິດຄື ການທີ່ພວກເຂົາໄດ້ຮຽນຮູ້ກ່ຽວກັບຄວາມເຊື່ອແລະເລີ່ມຕົ້ນດຳເນີນໃນຄວາມເຊື່ອນັ້ນ ການພັດທະນາຄວາມເຊື່ອໃຫ້ເຂັ້ມແຂງກໍ່ຄືກັບການພັດທະນາກ້າມເນື້ອຂອງເຮົາໃຫ້ແຂງແຮງ ທ່ານໃຊ້ຄວາມເຊື່ອຂອງທ່ານເທື່ອລະເລັກ ເທື່ອລະໜ້ອຍ ແລະທຸກຄັ້ງທີ່ທ່ານໃຊ້ຄວາມເຊື່ອຂອງ ທ່ານກໍ່ຈະເຂັ້ມແຂງຂຶ້ນເລື້ອຍໆ .

# ທາງຊີວິດໃໝ່

ມັດທາຍ 17:20 ສອນເຮົາວ່າທຸກສິ່ງຍ່ອມເປັນໄປໄດ້ສຳລັບຄົນທີ່ມີຄວາມເຊື່ອ ເຖິງວ່າມີຄວາມເຊື່ອພຽງໜ້ອຍດຽວກໍ່ຍັງສາມາດເຄື່ອນພູເຂົາແຫ່ງບັນຫາອອກໄປຈາກຊີວິດຂອງເຮົາໄດ້ ທ່ານອາດຈະໃຊ້ເວລາທັງໝົດ ຊີວິດເພື່ອພະຍາຍາມແກ້ໄຂບັນຫາ ແຕ່ຫຼາຍຄັ້ງທ່ານກໍ່ຮູ້ສຶກໝົດຫວັງ ແລະທໍ້ຖອຍໃຈເພາະມັນເຮັດບໍ່ໄດ້ ຖ້າທ່ານເປັນແນວນັ້ນທ່ານກໍ່ຢູ່ຂອບໆຂອງການມີປະສົບການໃໝ່ ເວລານີ້ທ່ານສາມາດໂອ້ລົມກັບພຣະເຈົ້າ (ອະທິຖານ) ແລະເຊີນໃຫ້ພຣະອົງເຂົ້າມາມີສ່ວນໃນທຸກສິ່ງທີ່ກ່ຽວຂ້ອງກັບຊີວິດຂອງທ່ານ ແລ້ວທ່ານຈະເຫັນວ່າສິ່ງທີ່ເປັນໄປບໍ່ໄດ້ສຳລັບມະນຸດ ສາ ມາດເປັນໄປໄດ້ສຳລັບພຣະເຈົ້າສະເໝີ .

ທຸກສິ່ງຍ່ອມເປັນໄປຕາມຄວາມເຊື່ອຂອງທ່ານ (ມັດທາຍ9:29) ທ່ານອາດຈະມີຊີວິດໃນຄວາມຢ້ານທັງໝົດຊີວິດ ແຕ່ນີ້ເປັນເວລາທີ່ທ່ານຈະແລກປ່ຽນຄວາມຢ້ານກັບຄວາມເຊື່ອໃນພຣະເຈົ້າ ການຮຽນຮູ້ສິ່ງໃໝ່ໆນັ້ນຕ້ອງອາໄສເວລາ ແຕ່ທ່ານບໍ່ຕ້ອງທໍ້ຖອຍໃຈຫຼືຍອມແພ້ເສຍກ່ອນ ທຸກສິ່ງໃນໂລກນີ້ເຮັດວຽກຕາມກົດເກນ ແຫ່ງການຈະເລີນເຕີບໂຕຢ່າງຊ້າ ໆ ໃຫ້ເຮົາເຮັດໃນສິ່ງທີ່ພຣະເຈົ້າບອກໃຫ້ເຮົາເຮັດເທື່ອລະເລັກເທື່ອລະໜ້ອຍກໍ່ຈະເຮັດໃຫ້ທຸກສິ່ງເກີດມີການປ່ຽນແປງໄດ້.

# ບົດທີ 9

# ຊີວິດປ່ຽມສຸກ

*ຂີ້ລັກມາກໍ່ພຽງແຕ່ຈະລັກ ຈະຂ້າແລະທຳລາຍເທົ່ານັ້ນ ຝ່າຍເຮົາມາເພື່ອຈະໃຫ້ເຂົາໄດ້ຊີວິດ ແລະຈະໄດ້ຊີວິດຢ່າງຄົບບໍລິບູນ (ເຕັມປ່ຽມ, ຈົນລົ້ນ)* ໂຢຮັນ10:10

ພຣະເຢຊູຊົງຍອມຕາຍ ເພື່ອທ່ານຈະໄດ້ມີຊີວິດທີ່ປ່ຽມສຸກ ແຕ່ກໍ່ບໍ່ໄດ້ໝາຍຄວາມວ່າທ່ານຈະໄດ້ຮັບທຸກສິ່ງທີ່ທ່ານຕ້ອງການແລະບໍ່ຕ້ອງພົບກັບຄວາມທຸກຍາກອີກເລີຍ ແຕ່ມັນໝາຍຄວາມວ່າໂດຍຜ່ານຄວາມສຳພັນຂອງທ່ານກັບພຣະເຈົ້າ ທ່ານສາມາດເປັນຂຶ້ນມາຢູ່ເໜືອຄວາມທຸກຍາກຂອງໂລກນີ້ ແລະແບ່ງປັນຊີວິດທີ່ເປັນຄືນມາໃໝ່ຂອງທ່ານທີ່ດຳລົງຢູ່ໂດຍພຣະເຈົ້າ ກັບພຣະເຈົ້າ ແລະເພື່ອພຣະເຈົ້າ ໂດຍຜ່ານຣິດອຳນາດຂອງພຣະວິນຍານບໍລິສຸດໄດ້.

ພຣະເຈົ້າຊົງເປັນຊີວິດທີ່ແທ້ຈິງຂອງເຮົາ ໃນພຣະອົງເຮົາມີຊີວິດແລະເຄື່ອນໄຫວແລະເປັນໂຕຂອງເຮົາ ການຮຽນຮູ້ທີ່ຈະຊື່ນຊົມ ພຣະເຈົ້າຈະປົດປ່ອຍທ່ານ ໃຫ້ສາມາດເບີກບານມ່ວນຊື່ນກັບຊີວິດຂອງຕົວເອງໄດ້ໃນແຕ່ລະມື້ຂອງຊີວິດ ຈົ່ງຊື່ນຊົມໃນການສາມັກຄີທຳກັບພຣະອົງ ພຣະເຈົ້າຊົງເປັນຫ່ວງໃນທຸກເລື່ອງທີ່ກ່ຽວຂ້ອງກັບຕົວທ່ານ ແລະພຣະຄຳພີກໍ່ບອກ

ໄວ້ຊັດເຈນວ່າ ພຣະເຈົ້າຈະເຮັດທຸກຢ່າງສົມບູນໃນຊີວິດຂອງທ່ານ ພຣະອົງກຳລັງເຮັດວຽກໃນຊີວິດຂອງທ່ານຢູ່ທຸກເວລາ ພຣະອົງກຳລັງນຳທ່ານໃຫ້ເຂົ້າສູ່ນ້ຳພຣະໄທອັນສົມບູນຍິ່ງຂຶ້ນຂອງພຣະອົງ.

## *ທາງຊີວິດໃໝ່*

ຢ່າຢ້ານພຣະເຈົ້າແບບຜິດໆ ເຮົາຄວນຢຳເກງພຣະເຈົ້າ ໝາຍຄວາມວ່າເຮົາຄວນເຄົາລົບແລະຮູ້ວ່າພຣະອົງຊົງເຕັມໄປດ້ວຍຣິດອຳນາດທັງສິ້ນທັງມວນແລະຖ້ອຍຄຳຂອງພຣະອົງບໍ່ສູນເປົ່າ ແຕ່ເຮົາບໍ່ຄວນຢ້ານວ່າທຸກຄັ້ງທີ່ເຮົາເຮັດຜິດພາດແລ້ວ ພຣະເຈົ້າຈະໃຈຮ້າຍ ແລະ ລົງໂທດເຮົາ ພຣະເຈົ້າຊົງພຣະເມດຕາ ແລະຊົງຮ້າຍຊ້າ ພຣະອົງຊົງອົດທົນດົນນານ ພຣະອົງຊົງຮູ້ເຖິງຂີດຈຳກັດຄວາມອ່ອນແອແລະຄວາມບົກຜ່ອງຂອງເຮົາ.

ຖ້າທ່ານເປັນພວກເຮົາທີ່ເຫຼືອ ທ່ານກໍ່ຈະມີຫຼາຍສິ່ງໃນຊີວິດແລະໃນບຸກຄະລິກທີ່ຈຳເປັນຕ້ອງໄດ້ຮັບການປ່ຽນແປງ ແລະພຣະເຈົ້າຊົງເປັນຜູ້ປ່ຽນແປງສິ່ງເຫຼົ່ານັ້ນ ແຕ່ຂ່າວດີກໍ່ຄືທ່ານສາມາດຊື່ນຊົມກັບພຣະເຈົ້າ ແລະຊື່ນຊົມກັບຊີວິດຂອງທ່ານໄດ້ ແມ່ນແຕ່ຂະນະທີ່ພຣະອົງກຳລັງທຳການປ່ຽນແປງຢູ່ນັ້ນ.

ທ່ານອາດຈະບໍ່ຕ້ອງການໃຫ້ຊີວິດຂອງທ່ານຈົບ ໃນສະພາບແບບທີ່ເປັນຢູ່ໃນທຸກມື້ນີ້ ແຕ່ມັນກໍ່ເປັນຊີວິດດຽວທີ່ທ່ານມີຢູ່ ເພາະສະນັ້ນຂອງໃຫ້ທ່ານເລີ່ມຕົ້ນຊື່ນຊົມຍິນດີກັບມັນເທີ້ນ ຈົ່ງຄົ້ນຫາສິ່ງດີໆໃຫ້ພົບເນັ້ນໃນສິ່ງທີ່ບວກແລະຮຽນຮູ້ທີ່ຈະແນມເຫັນສິ່ງດີໆໃນທຸກໆສິ່ງ ຊື່ນຊົມກັບ ຄອບຄົວແລະໝູ່ເພື່ອນຂອງທ່ານ ຢ່າແຍກພວກເຂົາອອກມາແລ້ວພະຍາຍາມ

ປ່ຽນແປງຊີວິດຂອງພວກເຂົາ ຈົ່ງອະທິຖານເພື່ອພວກເຂົາແລະມອບໃຫ້ພຣະເຈົ້າເປັນຜູ້ປ່ຽນແປງ.

ຈົ່ງຊື່ນຊົມກັບການເຮັດວຽກຂອງທ່ານ ຊື່ນຊົມຢູ່ບ້ານ ແລະຊື່ນຊົມກັບຊີວິດປົກກະຕິທຸກໆມື້ຂອງຊີວິດ ສິ່ງນີ້ເປັນໄປໄດ້ຖ້າທ່ານໄວ້ວາງໃຈໃນພຣະເຈົ້າ ແລະຕັດສິນໃຈມີທັດສະນະຄະຕິທີ່ດີ ປັກສາຍຕາຂອງທ່ານໄປທີ່ພຣະເຈົ້າ ບໍ່ແມ່ນຢູ່ທີ່ທຸກສິ່ງທີ່ຜິດປົກກະຕິທີ່ເກີດຂຶ້ນກັບທ່ານ ຊີວິດຂອງທ່ານ, ຄອບຄົວຂອງທ່ານແລະໃນໂລກນີ້ ພຣະເຈົ້າຊົງມີແຜນການທີ່ດີສຳລັບທ່ານ ພຣະອົງຊົງເລີ່ມຕົ້ນເຮັດຕາມແຜນການນັ້ນແລ້ວ ທ່ານສາມາດຊື່ນຊົມຍິນດີລ່ວງໜ້າໄດ້ ດ້ວຍການເບິ່ງໄປທີ່ສິ່ງດີຂ້າງໜ້າ ທີ່ກຳລັງຈະມາເຖິງ.

## *ຊີວິດປ່ຽມສຸກ*

ຄົນສ່ວນຫຼາຍ ດຳເນີນຊີວິດຄືກັບພວກເຂົາບໍ່ເຊື່ອວ່າ ພວກເຂົາສາມາດມີຊີວິດທີ່ປ່ຽມສຸກໄດ້ ຕາບໃດທີ່ພວກເຂົາຍັງຄົງມີບັນຫາຕ່າງໆຢູ່ ຊຶ່ງນັ້ນເປັນຄວາມຄິດທີ່ຜິດ ຢ່າແຊ່ຢູ່ກັບຄວາມຜິດພາດຫຼືມົວແຕ່ໂສກເສົ້າກັບອາດີດທີ່ຜ່ານມາ ແຕ່ຈົ່ງມຸ່ງໝັ້ນຄິດເຖິງສິ່ງອະນາຄົດໃໝ່ອັນດີເລີດທີ່ທ່ານຈະມີໄດ້ໂດຍຜ່ານທາງພຣະເຢຊູຄຣິດ ທ່ານສາມາດຊື່ນຊົມໄດ້ເມື່ອທ່ານຕັດສິນໃຈທີ່ຈະຊື່ນຊົມ ຈື່ໄວ້ວ່າຂ້ອຍກຳລັງສອນໃຫ້ທ່ານມີຊີວິດໃໝ່ ແລະທັດສະນະຄະຕິຂອງທ່ານທີ່ມີຕໍ່ຊີວິດເປັນສ່ວນປະກອບທີ່ໃຫຍ່ທີ່ສຸດ
.

ຂ້ອຍຮຽນຮູ້ທີ່ຈະຊື່ນຊົມໃນສິ່ງທີ່ຂ້ອຍເປັນ ໃນຂະນະທີ່ຂ້ອຍກຳລັງເດີນທາງໄປສູ່ສິ່ງທີ່ຂ້ອຍກຳລັງຈະເປັນ ແລະຂ້ອຍຂໍແນະນຳໃຫ້ທ່ານເຮັດແບບດຽວກັນກັບຂ້ອຍ ພຣະເຈົ້າຊົງມີຫຼາຍໆສິ່ງທີ່ຈະເຮັດໃນຊີວິດຂອງທ່ານແລະພຣະອົງບໍ່ຕ້ອງການໃຫ້ທ່ານເປັນທຸກໃນຂະນະທີ່ພຣະອົງກຳລັງເຮັດວຽກຢູ່ນັ້ນ ຄືກັບເດັກນ້ອຍທີ່ຈະຕ້ອງເຕີບໂຕເປັນຜູ້ໃຫຍ່ ຄຣິສຕຽນກໍ່ຕ້ອງເຕີບໂຕ ຫຼາຍຄັ້ງທີ່ຂະບວນການເຕີບໂຕນີ້ຕ້ອງໃຊ້ເວລາດົນກວ່າທີ່ເຮົາຕ້ອງການ ແຕ່ມັນບໍ່ແມ່ນຂໍ້ທີ່ເຮົາຈະບໍ່ຊື່ນຊົມກັບການເດີນທາງນີ້.

ພຣະເຈົ້າບໍ່ໄດ້ຄາດຫວັງໃຫ້ທ່ານສົມບູນແບບໃນມື້ນີ້ ແທ້ຈິງພຣະອົງຊົງຮູ້ອີກວ່າທ່ານຈະບໍ່ມີວັນເປັນຄົນດີພ້ອມສົມບູນແບບໄດ້ຕາບໃດທີ່ທ່ານຍັງດຳລົງຊີວິດຢູ່ໃນໂລກນີ້ ແຕ່ຢ່າງໃດກໍ່ຕາມພຣະອົງຊົງຄາດຫວັງໃຫ້ເຮົາແຕ່ລະຄົນເດີນໜ້າຕໍ່ໄປ ໃນທຸກໆມື້ເຮົາຄວນຕື່ນນອນຂຶ້ນມາແລະເຮັດສ່ວນຂອງເຮົາໃຫ້ດີທີ່ສຸດເພື່ອເປັນການຮັບໃຊ້ພຣະເຈົ້າ ເຮົາຄວນຍອມຮັບວ່າເຮົາຜິດພາດ ຂໍພຣະເຈົ້າຍົກຄວາມບາບຂອງເຮົາ ເຕັມໃຈຫັນກັບຈາກຄວາມບາບເຫຼົ່ານັ້ນ ຖ້າເຮົາເຮັດແບບນີ້ແລ້ວພຣະອົງຈະຊົງເຮັດໃນສ່ວນທີ່ເຫຼືອເອງ ພຣະເຈົ້າຈະຊົງເຮັດວຽກດ້ວຍກັນກັບເຮົາໂດຍຜ່ານທາງພຣະວິນຍານບໍລິສຸດ ພຣະອົງຈະຊົງສອນເຮົາປ່ຽນແປງເຮົາແລະໃຊ້ເຮົາທ່ານຕ້ອງກ້າວອອກມາເພື່ອເຂົ້າສູ່ຊີວິດໃໝ່ແລະເຊື່ອວ່າທ່ານບໍ່ມີວັນຕ້ອງເສຍໃຈ ຊື່ນຊົມກັບພຣະເຈົ້າ,ຊື່ນຊົມກັບຕົນເອງ ແລະຊື່ນຊົມກັບຊີວິດທີ່ພຣະເຢຊູໃຫ້ຈາກພຣະອົງໂດຍຜ່ານທາງການສິ້ນພຣະຊົນຂອງພຣະອົງ !

# ຄຳອະທິຖານເພື່ອຮັບຄວາມລອດພົ້ນ

ພຣະບິດາເຈົ້າລູກຮັກພຣະອົງ ໃນມື້ນີ້ລູກມາຫາພຣະອົງດ້ວຍຄວາມເຊື່ອ ເພື່ອຂໍການຍົກໂທດບາບຂອງລູກ ພຣະເຢຊູລູກເຊື່ອໃນພຣະອົງ ລູກເຊື່ອວ່າພຣະອົງຊົງຍອມຕາຍເທິງໄມ້ກາງແຂນເພື່ອລູກ ພຣະອົງຊົງເສຍສະຫຼະໂລຫິດອັນບໍລິສຸດເພື່ອລູກ ພຣະອົງຊົງຮັບໂທດທັງໝົດແທນລູກທັງໆທີ່ລູກສົມຄວນໄດ້ຮັບໂທດເຫຼົ່ານັ້ນ ລູກເຊື່ອວ່າພຣະອົງຊົງສິ້ນພຣະຊົນແລະຖືກຝັງໄວ້ແລະໃນວັນທີສາມ ພຣະອົງຊົງເປັນຄືນມາຈາກຄວາມຕາຍ ຄວາມຕາຍບໍ່ສາມາດຢຸດຢັ້ງພຣະອົງໄດ້ ພຣະອົງຊົງຊະນະຊາຕານແລະ ຊົງຍຶດເອົາກຸນແຈແຫ່ງນາລົກ ແລະຄວາມຕາຍຈາກມັນແລ້ວ ລູກເຊື່ອວ່າ ພຣະອົງຊົງເຮັດສິ່ງເຫຼົ່ານີ້ເພື່ອລູກ ເພາະພຣະອົງຊົງຮັກລູກ ລູກຕ້ອງການເປັນຄຣິສຕຽນ ລູກຕ້ອງການຮັບໃຊ້ພຣະອົງຕະຫຼອດທຸກວັນໃນຊີວິດຂອງລູກ ລູກຢາກຮຽນຮູ້ການດຳເນີນຊີວິດໃໝ່ທີ່ພຣະອົງຊົງສັນຍາໄວ້ໃຫ້ກັບລູກ ພຣະເຢຊູເວລານີ້ລູກຂໍຕ້ອນຮັບພຣະອົງ ແລະລູກຂໍມອບຖວາຍຕົວໃຫ້ແກ່ພຣະອົງ ຂໍຊົງຮັບລູກຕາມທີ່ລູກເປັນແລະຂໍສ້າງລູກໃຫ້ເປັນຕາມທີ່ພຣະອົງຊົງຕ້ອງການ.

ຂອບໃຈພຣະເຢຊູທີ່ຊົງຊ່ວຍລູກໃຫ້ລອດພົ້ນ ຂໍເຕີມລູກໃຫ້ເຕັມດ້ວຍພຣະວິນຍານບໍລິສຸດ ແລະຂໍຊົງສອນທຸກສິ່ງທີ່ລູກຈຳເປັນຕ້ອງຮຽນຮູ້ ເວລານີ້ລູກເຊື່ອວ່າ ລູກໄດ້ຮັບຄວາມລອດແລ້ວ ລູກບັງເກີດໃໝ່ແລ້ວ ແລະລູກຈະໄປສູ່ສະຫວັນເມື່ອລູກໝົດລົມຫາຍໃຈ ພຣະບິດາເຈົ້າລູກກຳລັງຈະມີຄວາມຊື່ນຊົມໃນເສັ້ນທາງຊີວິດຂອງລູກ ແລະລູກຈະມີຊີວິດຢູ່ເພື່ອຖວາຍກຽດແດ່ພຣະອົງ.

# ທ່ານຈະໃຊ້ຊີວິດນິຣັນຂອງທ່ານຢູ່ໃສ?



ຄົນສ່ວນຫຼາຍພາກັນເປັນຫ່ວງກັງວົນແຕ່ວ່າ ແມ່ນຫຍັງຈະເກີດຂຶ້ນໃນປະຈຸບັນນີ້ ຫຼືບາງເທື່ອກໍ່ອີກສອງສາມເດືອນທາງໜ້າ. ຢ່າງທີ່ດີທີ່ສຸດພວກເຂົາກໍ່ອາດຈະເປັນຫ່ວງສິ່ງທີ່ຈະເກີດຂຶ້ນຫຼັງຈາກອອກບຳນານແລ້ວ. ແຕ່ວ່າກ່ຽວກັບຊີວິດຫຼັງຄວາມຕາຍເດ້ເປັນແນວໃດ? ທ່ານໄດ້ກະກຽມມັນແດ່ໄວ້ບໍ່ ?

ເຖິງແມ່ນວ່າຈັກມື້ໜຶ່ງດ້ານຮ່າງກາຍຂອງທ່ານກໍ່ຈະຕາຍ ແຕ່ວ່າຊີວິດດ້ານວິນຍານຍັງຈະສືບຕໍ່ຢູ່ຕະຫຼອດໄປ. ບໍ່ວ່າວິນຍານຂອງທ່ານຈະໄດ້ຢູ່ໃນສະຫວັນ ຫຼືໃນນາລົກນັ້ນກໍ່ຂຶ້ນກັບສິ່ງທີ່ທ່ານໄດ້ເລືອກ. ໃນປຶ້ມເຫຼັ້ມນີ້ ເປັນປຶ້ມທີ່ຂາຍດີທີ່ສຸດຂອງ ຈອຍຊ໌ ໄມເອີຣ໌ ເພິ່ນໄດ້ເວົ້າເຖິງແຜນການຂອງພຣະເຈົ້າສຳລັບຄວາມລອດພົ້ນເພື່ອໃຫ້ທ່ານສາມາດຕັດສິນໃຈໄດ້ຖືກຕ້ອງ

## ດ້ວຍຄວາມຮັກ ແລະຄວາມອົດທົນ,ເພິ່ນຈຶ່ງມີຄຳສອນດັ່ງນີ້:

- ເລື່ອງທີ່ສຳຄັນກ່ຽວກັບພຣະເຢຊູ
- ຄວາມເຊື່ອເກີດຂຶ້ນໃນຈິດໃຈແນວໃດ ບໍ່ແມ່ນໃນຄວາມຄິດ
- ເລື່ອງທີ່ທ່ານຕ້ອງຮັບເຊື່ອພຣະຄຣິດ
- ການທີ່ຈະເລີ່ມຕົ້ນຊີວິດໃໝ່ຂອງທ່ານໄດ້ແນວໃດ

ບໍ່ຕ້ອງໃຫ້ມັນທຸກຕໍ່ໄປອີກແລ້ວ, ດຽວນີ້ເຖິງເວລາແລ້ວທີ່ທ່ານຈະໄດ້ຄົ້ນພົບ **ຊີວິດປ່ຽມສຸກ !**

JOYCE MEYER
ministries